ສງງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01 - 09
ກັນຍາ
2023
ປີທີ 12
ສະບັບທີ 936
ລາຍສັບປະດາ

## ທ່ານ ປອ. ໄຊສົມພອນ ພົມວິຫານ ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນເທື່ອທີ 5 ຢູ່ເມືອງສັງທອງ




(ສພຊ) ໃນທ້າຍເດືອນສິງຫາ 2023 ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ເຄື່ອນໄຫວພົບປະ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ຢູ່ເມືອງສັງທອງ, ນະຄອນຫຼວງວຽງຈັນ ແລະ ເຮັດວຽກຮ່ວມກັບຄະນະພັກ, ອົງການປົກຄອງ, ຂະແໜງການ, ພະນັກງານຫຼັກແຫຼ່ງຂອງເມືອງສັງທອງ, ນະຄອນຫຼວງວຽງຈັນ ພ້ອມດ້ວຍພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າຂອງເມືອງສັງທອງ ເຂົ້າຮ່ວມ.

ໂອກາດດັ່ງກ່າວ, ທ່ານ ປະທານສະພາແຫ່ງຊາດ ໄດ້ມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳຕໍ່ອຳນາດການປົກຄອງເມືອງສັງທອງ 10 ຂໍ້ ດັ່ງນີ້:

1. ສະເໜີໃຫ້ຄະນະພັກ, ອົງການປົກຄອງເມືອງ ເພີ່ມທະວີການນຳພາຮອບດ້ານຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມໜັກແໜ້ນ, ຍົກສູງສະຕິລະວັງຕົວຕໍ່ການເຄື່ອນໄຫວມ້າງເພທຳລາຍ ຂອງອິດທິກຳລັງປໍລະປັກ, ປັບປຸງສອງກຳລັງໃຫ້ມີຄວາມເຂັ້ມແຂງ, ມີຄວາມຈົງຮັກພັກດີຕໍ່ປະຊາຊົນ, ຕໍ່ລະ

ອ່ານຕໍ່ໜ້າ 2



### ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ຈະເດີນທາງຢ້ຽມຢາມ ສາທາລະນະລັດ ປະຊາຊົນຈີນ ແລະ ປະເທດ ມົງໂກລີ

ໂດຍຕອບສະໜອງຕາມຄຳເຊື້ອເຊີນຂອງທ່ານ ປະທານສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ແລະ ທ່ານ ປະທານສະພາຄູຣານໃຫຍ່ ແຫ່ງ ມົງໂກລີ, ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະເດີນທາງຢ້ຽມຢາມ ສາທາລະນະລັດ ປະຊາຊົນຈີນ ແລະ ປະເທດ ມົງໂກລີ ຢ່າງເປັນທາງການ ລະຫວ່າງຕົ້ນເດືອນກັນຍາໜ້ານີ້ ເພື່ອຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ສປປລາວ ແລະ ສາທາລະນະລັດ ປະຊາຊົນຈີນ ແລະ ປະເທດ ມົງໂກລີ ກໍຄືການພົວພັນຮ່ວມມືລະຫວ່າງ ສະພາແຫ່ງຊາດ ແຫ່ງ ສປປລາວ ກັບສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ແລະ ສະພາຄູຣານໃຫຍ່ ແຫ່ງ ມົງໂກລີ ໃຫ້ນັບມື້ນັບໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ.

ເລຂາທິການສະພາແຫ່ງຊາດ

ຜູ້ແທນປະຊາຊົນ PHOUTHEN PASAXON

## ປະທານສະພາແຫ່ງຊາດ ມອບເຄື່ອງຕອງນ້ຳສະອາດໃຫ້ບ້ານສີມສະໄໝ



(ສພຊ) ວັນທີ 29 ສິງຫາ 2023 ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວມອບເຄື່ອງຕອງນ້ຳສະອາດ ທີ່ໄດ້ຕິດຕັ້ງສຳເລັດແລ້ວ ໃຫ້ແກ່ບ້ານສີມສະໄໝ ເມືອງໄຊທານີ ນະຄອນຫຼວງວຽງຈັນ ເຊິ່ງເຄື່ອງດັ່ງກ່າວ ແມ່ນໄດ້ຮັບການຊ່ວຍເຫຼືອຈາກບໍລິສັດທີ່ປຶກສາ ດາຊານ ສ. ເກົາຫຼີ.

ໂອກາດດັ່ງກ່າວ, ທ່ານ ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໃນນາມຄະນະຈັດຕັ້ງພິທີໄດ້ລາຍງານໃຫ້ຮູ້ວ່າ: ໃນລະຫວ່າງທ້າຍເດືອນກັນຍາ2022 ຕາງໜ້າຈາກກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ກຳມາທິການການຕ່າງປະເທດ, ອົງການປົກຄອງ

ອ່ານຕໍ່ໜ້າ 3

## ສຳເລັດການປະເມີນກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ



(ສພຊ) ໃນລະຫວ່າງວັນທີ 28-29 ສິງຫາຜ່ານມາ, ກອງປະຊຸມປະເມີນກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ ໄດ້ດຳເນີນທີ່ແຂວງອັດຕະປື ພາຍໃຕ້ການເປັນປະທານຂອງ ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໂດຍການເຂົ້າຮ່ວມຂອງທ່ານ ເລັດ ໄຊຍະພອນ ກຳມະການສູນກາງພັກ, ເລຂາຄະນະພັກແຂວງ, ເຈົ້າແຂວງອັດຕະປື, ທ່ານ ນາງ ມິນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງອັດຕະປື, ບັນດາທ່ານການນຳພັກ-ລັດຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ອົງການຈັດຕັ້ງມະຫາຊົນ ແລະ ອະດີດສະມາຊິກສະພາແຫ່ງຊາດ, ອະດີດການການນຳຂັ້ນແຂວງ ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ພາຍຫຼັງທີ່ທ່ານປະທານກອງປະຊຸມໄດ້ກ່າວເປີດພິທີ ໂດຍຍົກໃຫ້ເຫັນຄວາມສຳຄັນ, ຄວາມໝາຍ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍແລ້ວ, ຄະນະຮັບຜິດຊອບໄດ້ຂຶ້ນຜ່ານບົດປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ ປະກອບມີ: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນ

ອ່ານຕໍ່ໜ້າ 4

## ລະດົມສະຕິປັນຍາ ແລະ ຄຳຄິດເຫັນ ໃສ່ກົດໝາຍ




(ສພຊ) ໃນລະຫວ່າງວັນທີ 24-25 ສິງຫາ 2023, ທີ່ຫ້ອງວ່າການປົກຄອງແຂວງວຽງຈັນ ໄດ້ມີກອງປະຊຸມຄະນະນຳພາ-ຊີ້ນຳການປັບປຸງກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ, ສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານ

ອ່ານຕໍ່ໜ້າ 3

## ປະເມີນກົດໝາຍ ໃນຂົງເຂດສະພາແຫ່ງຊາດ



(ສພຊ) ໃນລະຫວ່າງວັນທີ 24-25 ສິງຫາຜ່ານມາ, ທີ່ຫ້ອງປະຊຸມຫຼັກ 4 ແຂວງຈຳປາສັກ ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ຈັດກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ສາຍທອງ ໄຊຍະວົງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ມີຮອງປະທານກຳມາທິການກົດໝາຍ, ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຄະນະປະຈຳ,

ອ່ານຕໍ່ໜ້າ 4

## ຮອງປະທານສະພາແຫ່ງຊາດ ພົບປະອຳນາດການປົກຄອງເມືອງພຽງ



(ສພຊ) ວັນທີ 31 ສິງຫາ 2023 ທີ່ສະໂມສອນເມືອງພຽງ ແຂວງໄຊຍະບູລີ, ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ7ແຂວງໄຊຍະບູລີ ພ້ອມດ້ວຍຄະນະ ໄດ້ສົມທົບກັບປະທານສະພາປະຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແລະ ສະມາຊິກສະພາປະຊາຊົນແຂວງໄຊຍະບູລີ ໄດ້ພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5

ອ່ານຕໍ່ໜ້າ 3

## ທ່ານ ປອ. ໄຊສົມພອນ...

(ຕໍ່ຈາກໜ້າ 1)

ບອບໃໝ່; ເອົາໃຈໃສ່ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ເຮັດໃຫ້ສັງຄົມມີຄວາມສະຫງົບປອດໄພ, ເປັນພື້ນຖານໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ. ຖ້າເມືອງຂອງເຮົາຫາກເຮັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໄດ້ດີ ຈະເປັນສ່ວນປະກອບສຳຄັນໃຫ້ຄວາມສະຫງົບ,ຄວາມເປັນລະບຽບຮຽບຮ້ອຍ ໃຫ້ແກ່ນະຄອນຫຼວງວຽງຈັນ.

2. ເມືອງສັງທອງ ເປັນເມືອງທີ່ຕັ້ງຢູ່ບໍ່ໄກຈາກນະຄອນຫຼວງວຽງຈັນ (ພຽງ 60 ກິໂລແມັດ), ເປັນເມືອງທີ່ມີເນື້ອທີ່ດິນກວ້າງຂວາງ ຈຳນວນ 73 ພັນ ເຮັກຕາ, ພູພຽງ ແລະ ເປັນເນີນສູງກວມເອົາ 40%, ມີຄວາມອຸດົມສົມບູນ ແລະ ເໝາະສົມກັບການຜະລິດກະສິກຳ; ການທ່ອງທ່ຽວ; ປະຊາຊົນມີມູນເຊື້ອດຸໝັ່ນ, ຮັກການອອກແຮງງານ ຈຶ່ງສະເໜີໃຫ້ຄະນະພັກ,ອົງການປົກຄອງເມືອງເອົາໃຈໃສ່ຊຸກຍູ້ສົ່ງເສີມ ແລະ ສ້າງເງື່ອນໄຂ ໃຫ້ປະຊາຊົນເຮັດການຜະລິດກະສິກຳ, ການລ້ຽງສັດເປັນສິນຄ້າປ້ອນຕະຫຼາດຕ່າງໆໃນນະຄອນຫຼວງວຽງຈັນ ເຊິ່ງເປັນບ່ອນຮອງຮັບຜົນຜະລິດຂອງປະຊາຊົນ. ພ້ອມກັນນັ້ນ, ໃນເງື່ອນໄຂທີ່ພວກເຮົາມີລົດໄຟຄວາມໄວສູງ, ທາງຍຸດທະສາດ ເລກທີ 13 ເໜືອ, ທາງດ່ວນນະຄອນຫຼວງວຽງຈັນ-ວັງວຽງ ກໍເປັນທ່າແຮງໜຶ່ງ ຊຸກຍູ້ໃຫ້ແກ່ການຜະລິດກະສິກຳ, ການລ້ຽງສັດເປັນສິນຄ້າ ເພື່ອສ້າງວຽກເຮັດງານທຳ, ສ້າງລາຍຮັບທີ່ໝັ້ນຄົງ ໃຫ້ແກ່ປະຊາຊົນບັນດາເຜົ່າ. ສະນັ້ນ, ຈຶ່ງສະເໜີໃຫ້ບັນດາສະຫາຍນຳໃຊ້ທ່າແຮງດັ່ງກ່າວ ເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມຂອງເມືອງ ໃຫ້ມີບາດກ້າວຫັນປ່ຽນທີ່ຕັ້ງໜ້າ. ເອົາໃຈໃສ່ສ້າງ ແລະ ຂະຫຍາຍຮູບແບບເສດຖະກິດລວມໝູ່ຂອງປະຊາຊົນ ໃຫ້ກາຍເປັນຖານເສດຖະກິດອັນໝັ້ນຄົງ ແລະ ໜັກແໜ້ນ; ຊຸກຍູ້ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ດ້ວຍການປະຕິບັດນະໂຍບາຍ ແລະ ກົນໄກທີ່ຈຳເປັນໃນການເຂົ້າເຖິງແຫຼ່ງທຶນ, ຕະຫຼາດ ແລະນະໂຍບາຍອື່ນໆ ເຮັດໃຫ້ວິສາຫະກິດດັ່ງກ່າວມີຄວາມເຂັ້ມແຂງ.



3. ເອົາໃຈໃສ່ການພັດທະນາຊັບພະຍາກອນມະນຸດ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ແລະ ສາມາດຕອບສະໜອງແກ່ການສ້າງສາພັດທະນາພາຍໃນເມືອງຂອງເຮົາ ເປັນຕົ້ນການສ້າງນັກວິຊາການດ້ານການປູກ ຝັງ-ລ້ຽງສັດ ເພື່ອເຮັດໃຫ້ການຜະລິດກະສິກຳ ພາຍໃນເມືອງຂອງເຮົາຂະຫຍາຍຕົວ ແລະ ມີຄວາມເຂັ້ມແຂງ; ສຶກສາອົບຮົມໃຫ້ປະຊາຊົນຮັກສາມູນເຊື້ອຄວາມສາມັກຄີປອງດອງ,ນ້ຳໃຈຮັກຊາດ ແລະ ເສຍສະຫຼະເພື່ອຜົນປະໂຫຍດສ່ວນລວມ; ສ້າງສະຕິເຄົາລົບກົດໝາຍ,ການປະຕິບັດພັນທະຂອງປະຊາຊົນ; ເພີ່ມທະວີການຝຶກອົບຮົມສີມືແຮງງານ ໃຫ້ມີຄຸນນະພາບ, ປະຊາຊົນມີວຽກເຮັດງານທຳ, ມີລາຍຮັບ ແລະ ມີຊີວິດການເປັນຢູ່ທີ່ໝັ້ນຄົງດີຂຶ້ນ.

4. ວຽກງານດ້ານສາທາລະນະສຸກ ກໍສະເໜີໃຫ້ຄະນະພັກ, ອົງການປົກຄອງເມືອງ ເພີ່ມທະວີຄວາມເອົາ ໃຈໃສ່ໃຫ້ພໍ່ແມ່ປະຊາຊົນສາມາດເຂົ້າເຖິງການປິ່ນປົວຢ່າງກວ້າງຂວາງ, ສະດວກ ແລະ ມີປະສິດທິພາບ; ເອົາໃຈໃສ່ປັບປຸງໂຮງໝໍເມືອງ, ສຸກສາລາ ດ້ວຍການປະກອບອຸປະກອນ, ເຄື່ອງມືດ້ານການແພດ ທີ່ສາມາດຍົກສູງປະສິດທິພາບໃນການປິ່ນປົວໃຫ້ສູງຂຶ້ນ; ເພີ່ມຄວາມສາມາດໃນການເຝົ້າລະວັງຕິດຕາມ, ບົ່ງມະຕິ, ຊອກຄົ້ນຫາ ແລະ ໂຕ້ຕອບກໍລະນີພະຍາດລະບາດໃຫ້ໄດ້ໄວ.

5. ປັບປຸງຄຸນນະພາບການສຶກສາໃຫ້ສູງຂຶ້ນ, ເອົາໃຈໃສ່ການສ້າງ ແລະ ສ້ອມແປງໂຮງຮຽນ ເພື່ອອຳນວຍຄວາມສະດວກໃຫ້ແກ່ລູກຫຼານໄດ້ເຂົ້າຮຽນ, ປະກອບປຶ້ມແບບຮຽນ, ອຸປະກອນການຮຽນ ພ້ອມທັງສ້າງເງື່ອນໄຂການເຂົ້າເຖິງການສຶກສາ ແລະ ຂະຫຍາຍຕາໜ່າງການສຶກສາໃຫ້ມີຄຸນນະພາບນັບມື້ສູງຂຶ້ນ ແລະ ທົ່ວເຖິງຢູ່ເຂດຫ່າງໄກສອກຫຼີກ.

6. ປັບປຸງກົງຈັກການຈັດຕັ້ງຕາມທິດກະທັດຮັດ; ສະກັດກັ້ນການນຳໃຊ້ສິດ, ອຳນາດໃນທາງທີ່ບໍ່ຖືກກົດໝາຍຂອງພະນັກງານລັດ; ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ປະຊາຊົນ ມີສ່ວນຮ່ວມເຂົ້າໃນວຽກງານບໍລິຫານລັດ, ສາມາດເຂົ້າເຖິງຂະບວນການຍຸຕິທຳ ເຮັດໃຫ້ຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ການນຳພາຂອງພັກ-ລັດໃຫ້ສູງຂຶ້ນ.

7. ເພີ່ມທະວີການຊີ້ນຳ-ນຳພາຂອງອົງຄະນະພັກເມືອງ ຕໍ່ການເຄື່ອນໄຫວວຽກງານຂອງສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນທີ່ປະຈຳຢູ່ເມືອງສັງທອງ ໃຫ້ສາມາດເຄື່ອນໄຫວປະຕິບັດໜ້າທີ່ເປັນຕົວແທນຂອງປະຊາຊົນ ຕາມກົດໝາຍກຳນົດ, ຄົ້ນຄວ້າປະກອບບຸກຄະລາກອນຊ່ວຍວຽກ ລວມທັງສະຖານທີ່ເຮັດວຽກ ແລະ ອຸປະກອນຮັບໃຊ້ການເຄື່ອນໄຫວວຽກງານໃຫ້ມີຄວາມເໝາະສົມ ແນໃສ່ເຮັດໃຫ້ການປະຕິບັດໜ້າທີ່ວຽກງານເຂົ້າສູ່ລະບົບ ແລະ ມີປະສິດທິຜົນນັບມື້ສູງຂຶ້ນ.

8. ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ເຊິ່ງຈະໄດ້ມີການສະຫຼຸບໃນທ້າຍປີນີ້, ເປັນໜ້າທີ່ການເມືອງສຳຄັນຂອງອົງຄະນະພັກທຸກຂັ້ນ ຈະຕ້ອງໄດ້ພ້ອມກັນສູ້ຊົນຈັດຕັ້ງປະຕິບັດສະເໜີມາຍັງຄະນະພັກ, ອົງການປົກຄອງເມືອງສັງທອງ ເພີ່ມທະວີການນຳພາຊີ້ນຳ ພະນັກງານ, ທະຫານ, ຕຳຫຼວດ ກໍ່ຄືປະຊາຊົນບັນດາເຜົ່າ ຈັດຕັ້ງປະຕິບັດວາລະແຫ່ງຊາດຢ່າງຕັ້ງໜ້າ ແລະ ຖືເປັນພັນທະຂອງພົນລະເມືອງທຸກຄົນ ເປັນຕົ້ນການປະຕິບັດນະໂຍບາຍປະຢັດມັດທະຍັດງົບປະມານຂອງລັດ, ຫຼີກລ່ຽງການສ້າງແຜນການລົງທຶນຂອງລັດ ເກີນຄວາມສາມາດໃນການຊຳລະສະສາງ ເຊິ່ງຈະເກີດໜີ້ສິນໃນອະນາຄົດ; ການຂຸດຄົ້ນແຫຼ່ງລາຍຮັບ ແລະ ຊຸກຍູ້ສົ່ງເສີມປະຊາຊົນເຮັດການຜະລິດ ເພື່ອສ້າງຖານລາຍຮັບໃໝ່, ການແກ້ໄຂບັນຫາຮົ່ວໄຫຼຂອງງົບປະມານ ແລະ ອື່ນໆ. ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ກໍເປັນວຽກງານທີ່ສຳຄັນ ເຊິ່ງບັນຫາດັ່ງກ່າວເປັນໄພອັນຕະລາຍຕໍ່ປະເທດຊາດ, ເປັນປາກົດການຫຍໍ້ທໍ້ຂອງສັງຄົມ ສະເໜີໃຫ້ເອົາໃຈໃສ່ສະກັດກັ້ນບັນຫາຢາເສບຕິດບໍ່ໃຫ້ເກີດຂຶ້ນ ເຊິ່ງຈະສົ່ງຜົນກະທົບຕໍ່ລູກຫຼານທີ່ເປັນອານາຄົດຂອງປະເທດຊາດພວກເຮົາ.

9. ການສ້າງຮາກຖານການເມືອງ: ໃນສະພາບແວດລ້ອມຂອງພາກພື້ນແລະສາກົນທີ່ຜັນແປໄປຢ່າງສະຫຼັບຊັບຊ້ອນ ໄດ້ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ. ຕໍ່ໜ້າສະພາບການດັ່ງກ່າວນັ້ນ ການສ້າງຮາກຖານການເມືອງເປັນວຽກງານທີ່ມີຄວາມສຳຄັນຫຼາຍ, ຖ້າເຮົາປະຮາກຖານຍາມໃດຮາກຖານຂອງພວກເຮົາກໍຈະຖືກແຊກແຊງ ເພື່ອແບ່ງແຍກ, ປັ່ນປ່ວນ, ມ້າງເພທຳລາຍ. ສະນັ້ນ, ຄະນະພັກ, ອົງການປົກຄອງເມືອງ ຈະຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ວຽກງານການກໍ່ສ້າງຮາກຖານການເມືອງ, ລົງໃກ້ຊິດຕິດແທດກັບພໍ່ແມ່ປະຊາຊົນຢ່າງແທດເຖິງ. ຖ້າຄະນະພັກ, ອົງການປົກຄອງເມືອງ ມີຄວາມຕິດພັນກັບຮາກຖານຢ່າງແໜ້ນແຟ້ນ, ຮູ້ຖືເອົາປະຊາຊົນເປັນກົກ ແລະ ຮູ້ເຮັດເພື່ອຜົນປະໂຫຍດຂອງປະຊາຊົນນັ້ນ, ອົງການປົກຄອງເມືອງກໍຈະໄດ້ຮັບການສະໜັບສະໜູນຈາກປະຊາຊົນ ແລະ ຮາກຖານການເມືອງກໍຈະໜັກແໜ້ນ, ຂະບວນການຂອງມະຫາຊົນ ກໍຈະຟົດຟື້ນ.

10. ການກະກຽມກອງປະຊຸມໃຫຍ່ 3 ຂັ້ນ ກໍເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ເຊິ່ງອົງຄະນະພັກເມືອງສັງທອງ ຈະໄດ້ນຳພາບັນດາຮາກຖານພັກຈັດຕັ້ງປະຕິບັດ ເພື່ອສຸມໃສ່ບັນດາວຽກງານຕ່າງໆ ດັ່ງນີ້:

- ການສ້າງຂະບວນການເພື່ອຍູ້ແຮງຂະບວນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI, ຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ເລກທີ 411/ຄລສພ, ລົງວັນທີ 8/8/2023 ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ, ຄຳແນະນຳ ເລກທີ 211/ຄຈສພ, ລົງວັນທີ 16/8/ 2023 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ກໍຄືມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກນະຄອນຫຼວງ, ມະຕິກອງປະຊຸມໃຫຍ່ອົງຄະນະພັກເມືອງໃຫ້ບັນລຸຕາມຄາດໝາຍທີ່ວາງອອກ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ; ຫັນພະນັກງານ-ສະມາຊິກພັກຂອງຂະແໜງການຕ່າງໆ ລົງກໍ່ສ້າງຮາກຖານການເມືອງ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ. ຜ່ານຂະບວນການດັ່ງກ່າວ ເພື່ອເລືອກເຟັ້ນເອົາພະນັກງານ-ສະມາຊິກພັກ ຜູ້ທີ່ດີເດັ່ນ, ມີມາດຕະຖານ, ເງື່ອນໄຂຄົບຖ້ວນປະກອບເຂົ້າໃນຄະນະພັກຂັ້ນຕ່າງໆ.

- ການເລືອກເຟັ້ນບຸກຄະລາກອນ ກະກຽມໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ເພື່ອປະກອບເຂົ້າໃນຄະນະບໍລິຫານງານພັກແຕ່ລະຂັ້ນ ຕ້ອງຮັບປະກັນມາດຕະຖານ, ເງື່ອນໄຂ; ຕິດພັນກັບແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂອງເມືອງ; ດ້ານໂຄງປະກອບຕ້ອງສູ້ຊົນໃຫ້ມີເພດຍິງ, ຊົນເຜົ່າມີຈຳນວນເພີ່ມຂຶ້ນ; ເອົາໃຈໃສ່ເລືອກເຟັ້ນເອົາເລຂາພັກຮາກຖານບ້ານ ແລະ ເລຂາໜ່ວຍພັກບ້ານທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນສະໝັກເຂົ້າໃນຄະນະພັກຊຸດໃໝ່ໃຫ້ມີຈຳນວນເພີ່ມຂຶ້ນ.

- ການກະກຽມດ້ານເນື້ອໃນ ໃຫ້ແກ່ກອງປະຊຸມໃຫຍ່ 3 ຂັ້ນ ໂດຍສະເພາະບົດລາຍງານການເມືອງ; ບົດສຳຫຼວດການນຳພາລວມຂອງຄະນະພັກແຕ່ລະຂັ້ນ ຕ້ອງສ່ອງແສງໃຫ້ເຫັນການຊີ້ນຳ-ນຳພາຮອບດ້ານຂອງຄະນະພັກ ໃນການປະຕິບັດແນວທາງນະໂຍບາຍຂອງພັກ, ກົດລະບຽບຂອງພັກ, ມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກເມືອງ ໃນໄລຍະ 5 ປີຜ່ານມາ.

## ເລື່ອງເດັ່ນ ຂ່າວເດັດ

*# ຄັດໂດຍ: ທອມສະນິດ*

❒ *ຢາສູບໄຟຟ້າມີສານຊະນິດຕ່າງໆ ຫຼາຍກວ່າ 4.000ຊະນິດທີ່ສົ່ງຜົນກະທົບຕໍ່ສຸຂະພາບຂອງຜູ້ສູບ ເປັນຕົ້ນ ສົ່ງຜົນກະທົບຕໍ່ຫຼອດປອດ ເຮັດໃຫ້ຫຼອດປອດມີການອຸດຕັນ ສົ່ງຜົນກະທົບຕໍ່ລະບົບປະສາດ, ສະໝອງ ຈະເຮັດໃຫ້ຄວາມຈຳສັ້ນ ຊຶມເສົ້າ ຄວບຄຸມອາລົມຈິດບໍ່ໄດ້ ອັກເສບຫຼອດລົມຊຳເຮື້ອ ກໍ່ໃຫ້ເກີດພະຍາດມະເຮັງ; ພ້ອມນັ້ນ, ຢາສູບໄຟຟ້າຍັງສົ່ງຜົນກະທົບຕໍ່ຄົນໃກ້ຊິດທີ່ໄດ້ຮັບຄວັນຢາສູບ ໂດຍສະເພາະເດັກນ້ອຍ, ແມ່ຍິງຖື ຫຼື ຜູ້ສູງອາຍຸ ແລະ ເສຍຊີວິດໄດ້.*

***ໜສພ. ວຽງຈັນໃໝ່ 30/08/2023***

❒ *ສະພາບອັດຕາເງິນເຟີ້ ປະຈຳເດືອນສິງຫາ 2023 ຂອງສູນສະຖິຕິແຫ່ງຊາດ ກະຊວງແຜນການ ແລະ ການລົງທຶນ ລະບຸວ່າ: ໃນເດືອນສິງຫາ 2023 ທ່າອ່ຽງລາຄາສິນຄ້າຍັງສືບຕໍ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ ແຕ່ເປັນການເພີ່ມຂຶ້ນໃນຈັງຫວະທີ່ຊ້າລົງ. ດັດຊະນີລາຄາສິນຄ້າໂດຍລວມຂອງເດືອນສິງຫາ 2023 ຢູ່ໃນລະດັບ 195,10 ເຊິ່ງເພີ່ມຂຶ້ນຈາກ 154,99 ໃນເດືອນສິງຫາ 2022 ເຮັດໃຫ້ອັດຕາເງິນເຟີ້ລວມຂອງ ສປປ ລາວ ໃນເດືອນສິງຫານີ້ ຢູ່ໃນລະດັບ 25,9% (ເດືອນກໍລະກົດຢູ່ໃນລະດັບ 27,8%); ເມື່ອທຽບລາຄາສິນຄ້າ ແລະ ບໍລິການ ເດືອນສິງຫາ 2023 ທຽບກັບເດືອນກໍລະກົດ2023ເຫັນວ່າຍັງສືບຕໍ່ເພີ່ມຂຶ້ນເຊິ່ງເພີ່ມຂຶ້ນ 2,6%, ໝວດຮ້ານອາຫານ ແລະ ໂຮງແຮມ ເພີ່ມຂຶ້ນ 3,7%, ໝວດສະບຽງອາຫານແລະເຄື່ອງດື່ມບໍ່ແມ່ນທາດເຫຼົ້າ ເພີ່ມຂຶ້ນ 3,0%, ໝວດຮັກສາສຸຂະພາບ ແລະ ຢາ ເພີ່ມຂຶ້ນ 2,7%, ໝວດຄົມມະນາຄົມ ແລະ ການຂົນສົ່ງ ເພີ່ມຂຶ້ນ 2,3%.*

***ໜສພ. ປະຊາຊົນ 31/08/2023***

## ປະທານສະພາ...

(ຕໍ່ຈາກໜ້າ 1)

ເມືອງ 3 ເມືອງ ແລະ ອົງການປົກຄອງບ້ານທັງ 3 ບ້ານຄື: ບ້ານນາຫອຍປັງ ເມືອງສັງທອງ, ບ້ານສົມສະໄໝ ເມືອງໄຊທານີ ແລະ ບ້ານຊຽງແລນາ ເມືອງປາກງື່ມ ຮ່ວມກັບຄະນະຊ່ຽວຊານຂອງບໍລິສັດທີ່ປຶກສາດາຊານ ສ. ເກົາຫຼີ ໄດ້ລົງສຳຫຼວດກວດກາ ແລະ ເປັນເອກະພາບກັນ ກຳນົດຈຸດທີ່ຈະຕັ້ງເຄື່ອງຕອງນໍ້າສະອາດ; ບໍລິສັດທີ່ປຶກສາ ດາຊານ ສ. ເກົາຫຼີ ໄດ້ເອົານໍ້າແຕ່ລະຈຸດທີ່ຈະຕິດຕັ້ງໄປວິໄຈ ເພື່ອກຳນົດມາດຕະຖານເຄື່ອງຕອງນໍ້າໃຫ້ຖືກຕາມເປົ້າໝາຍ ຕາມສະພາບຕົວຈິງຂອງແຕ່ລະເຂດ. ປະຕິບັດຕາມແຜນການເຄື່ອນໄຫວທີ່ໄດ້ກຳນົດຕາງໜ້າກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ກຳມາທິການການຕ່າງປະເທດ ສະພາແຫ່ງຊາດປະສານສົມທົບກັບອົງການປົກຄອງເມືອງທັງ 3 ເມືອງ ແລະ ອົງການປົກຄອງບ້ານທັງ 3 ບ້ານ ຮ່ວມກັບຄະນະວິຊາການບໍລິສັດທີ່ປຶກສາດາຊານ ສ. ເກົາຫຼີ ໄດ້ຕິດຕັ້ງເຄື່ອງຕອງນໍ້າທັງ 3 ເຄື່ອງ ໃນ 3 ບ້ານສຳເລັດໃນລະຫວ່າງວັນທີ 7-9 ມິຖຸນາ 2023, ໃນວັນທີ 13-14 ມິຖຸນາ 2023 ໄດ້ລົງຕິດຕາມກວດກາ ແລະ ໃຫ້ການແນະນຳກ່ຽວກັບການຄຸ້ມຄອງນຳໃຊ້; ໃນຕອນແລງຂອງວັນທີ 14 ມິຖຸນາ 2023 ໄດ້ຈັດພິທີມອບ-ຮັບ ເຄື່ອງຕອງນໍ້າ ລະຫວ່າງ ບໍລິສັດທີ່ປຶກສາ ດາຊານ ສ. ເກົາຫຼີ ແລະ ສະພາແຫ່ງຊາດ ຢ່າງເປັນທາງການ ໂດຍການເຂົ້າຮ່ວມພິທີດັ່ງກ່າວ ຕາງໜ້າຈາກບັນດາກຳມາທິການພາຍໃນສະພາແຫ່ງຊາດ, ເອກອັກຄະລັດຖະທູດ ສ. ເກົາຫຼີ ປະຈຳ ສປປ ລາວ, ກົມຊົນລະປະທານ, ກົມກ່ຽວຂ້ອງພາຍໃນສະພາແຫ່ງຊາດ, ອົງການປົກຄອງເມືອງທັງ 3 ເມືອງ ແລະ ອົງການປົກຄອງບ້ານທັງ 3 ບ້ານ.

ຈາກນັ້ນ, ທ່ານປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເດີນທາງໄປຢ້ຽມຢາມກຸ່ມຜະລິດກະສິກຳອິນຊີ ບ້ານທ່າຊ້າງ ເມືອງປາກງື່ມ ນະຄອນຫຼວງວຽງຈັນ ເຊິ່ງໄດ້ຮັບຟັງການລາຍງານສະພາບລວມກ່ຽວກັບກຸ່ມຜະລິດກະສິກຳອິນຊີ ຈາກພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງວຽງຈັນ ແລະ ຕາງໜ້າກຸ່ມຜະລິດກະສິກຳທ່າຊ້າງ; ຈາກນັ້ນ, ຄະນະ ຍັງໄດ້ຢ້ຽມຊົມເຂດທຳການຜະລິດຕື່ມອີກ.

ໂອກາດນີ້, ທ່ານປະທານສະພາແຫ່ງຊາດ ໄດ້ມີຄຳເຫັນໂອ້ລົມວ່າ: ໃຫ້ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນເອົາໃຈໃສ່ປົກປັກຮັກສາເພື່ອນຳໃຊ້ເຄື່ອງກອງນໍ້າດັ່ງກ່າວໃຫ້ເກີດປະໂຫຍດ ແລະ ນຳໃຊ້ໃຫ້ໄດ້ຍາວນານ, ເອົາໃຈໃສ່ຮັກສາສຸຂະນາໄມດື່ມນໍ້າສະອາດ, ຮັກແພງສາມັກຄີ ຊ່ວຍເຫຼືອເຊິ່ງກັນແລະກັນ ຮັກສາຄວາມສະຫງົບພາຍໃນບ້ານ, ຊຸກຍູ້ສົ່ງເສີມໃຫ້ລູກຫຼານໄດ້ເຂົ້າສຶກສາຮໍ່າຮຽນຢ່າງເປັນປົກກະຕິ. ສຳລັບກຸ່ມຜະລິດກະສິກຳອິນຊີ ບ້ານທ່າຊ້າງແມ່ນໃຫ້ສືບຕໍ່ເອົາໃຈໃສ່ທຳການຜະລິດໃຫ້ໄດ້ຫຼາຍ ເຊິ່ງຈະເປັນການສ້າງເສດຖະກິດໃຫ້ແກ່ຊຸມຊົນ ກໍຄືພໍ່ແມ່ປະຊາຊົນໃຫ້ກຸ້ມຢູ່ກຸ້ມກິນ ສາມາດຜະລິດເປັນສິນຄ້າສົ່ງອອກທັງພາຍໃນ ແລະ ຕ່າງປະເທດ ທັງເປັນການສ້າງວຽກເຮັດງານທຳໃຫ້ປະຊາຊົນຫຼຸດຜ່ອນການໄປອອກແຮງງານຢູ່ຕ່າງປະເທດ.

**(ກົງທະນູຄຳ ພິພັດເສລີ)**

## ລະດົມສະຕິປັນຍາ...

(ຕໍ່ຈາກໜ້າ 1)

ສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານຄຳພັນ ສິດທິດຳພາ ເຈົ້າແຂວງວຽງຈັນ, ມີປະທານສະພາປະຊາຊົນແຂວງວຽງຈັນ, ບັນດາສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ. ທັງນີ້, ເພື່ອເປັນບ່ອນອີງໃຫ້ການປະເມີນການຈັດຕັ້ງປະຕິບັດ ແລະ ການທາບທາມຮ່າງກົດໝາຍ 4 ສະບັບມີຄວາມເໝາະສົມກັບສະພາບຕົວຈິງ, ສອດຄ່ອງກັບກົດໝາຍ ແລະ ຮັບປະກັນປະສິດທິພາບ; ເພື່ອເປັນການລະດົມສະຕິປັນຍາ, ຄຳຄິດເຫັນທີ່ເປັນປະໂຫຍດຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືເປົ້າໝາຍທີ່ກ່ຽວຂ້ອງຕ່າງໆ ເພື່ອປັບປຸງກົດໝາຍ 4 ສະບັບໃຫ້ຄົບຖ້ວນ, ຮັດກຸມ ແລະ ແທດເໝາະກັບສະພາບຕົວຈິງ ກ່ອນນຳສະເໜີຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນານຳເຂົ້າກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ.

ໂອກາດນີ້, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນກ່າວໄຂກອງປະຊຸມວ່າ: ເນື້ອໃນການປະເມີນຄັ້ງນີ້ຈະໄດ້ສຸມໃສ່ຕີລາຄາເບິ່ງການໂຄສະນາເຜີຍແຜ່ແຕ່ລະກົດໝາຍເລິກເຊິ່ງ, ທົ່ວເຖິງທຸກເປົ້າໝາຍແນວໃດ?; ມີມາດຕາໃດແດ່ທີ່ສອດຄ່ອງສາມາດປະຕິບັດໄດ້? ມີມາດຕາໃດແດ່ສອດຄ່ອງຢູ່ແຕ່ປະຕິບັດໄດ້ຍາກ? ມີມາດຕາໃດແດ່ທີ່ບໍ່ສອດຄ່ອງຕ້ອງໄດ້ປັບປຸງ? ມີມາດຕາໃດແດ່ທີ່ຊໍ້າຊ້ອນກັບກົດໝາຍອື່ນເຊິ່ງຕ້ອງໄດ້ປັບປຸງໃຫ້ລະອຽດຈະແຈ້ງ? ມີບັນຫາໃດແດ່ທີ່ຄວນເພີ່ມເປັນມາດຕາໃໝ່?; ບັນຫາທີ່ພົວພັນກັບກົດໝາຍອື່ນ ເຊັ່ນ: ກົດໝາຍວ່າດ້ວຍລັດຖະບານ ແລະ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ; ກົດໝາຍວ່າດ້ວຍສານປະຊາຊົນ; ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ; ກົດໝາຍວ່າດ້ວຍການກວດກາລັດ; ກົດໝາຍວ່າດ້ວຍການກວດສອບແຫ່ງລັດ; ກົດໝາຍວ່າດ້ວຍການລົງທຶນຂອງລັດ; ກົດໝາຍວ່າດ້ວຍງົບປະມານ ເປັນຕົ້ນ?; ສັງເກດຕີລາຄາການຈັດຕັ້ງປະຕິບັດແຕ່ລະກົດໝາຍ ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດ? ມີດ້ານດີ, ດ້ານຄົງຄ້າງແນວໃດ? ຈະຕ້ອງປັບປຸງແກ້ໄຂແນວໃດຈຶ່ງສອດຄ່ອງ?. ກອງປະຊຸມຄັ້ງນີ້ ມີຄວາມໝາຍສຳຄັນຫຼາຍ, ມີເນື້ອໃນກວ້າງຂວາງ, ເລິກເຊິ່ງ ແລະ ພົວພັນເຖິງການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 1991 ຄົບຮອບ 32 ປີ ແລະ ສະບັບປີ 2015 ຄົບຮອບ 7 ປີ ແຕ່ເວລາມີພຽງ 2 ວັນເທົ່ານັ້ນ ຈຶ່ງຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມ ຈົ່ງໄດ້ເຊີດຊູຄວາມຮັບຜິດຊອບ, ສຸມສະຕິປັນຍາ ເພື່ອຄົ້ນຄວ້າປະກອບຄຳເຫັນ ຕໍ່ແຕ່ລະເນື້ອໃນຂອງແຕ່ລະກົດໝາຍ ຕາມວາລະກອງປະຊຸມໃຫ້ມີຈຸດສຸມ, ຮັກສາເວລາ ເຊິ່ງຄຳເຫັນຂອງບັນດາທ່ານຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບ ນຳໄປຄົ້ນຄວ້າ, ວິເຄາະວິໄຈ ປັບປຸງກົດໝາຍແຕ່ລະສະບັບ ເຮັດໃຫ້ແຕ່ລະກົດໝາຍ ມີເນື້ອໃນຈະແຈ້ງ, ຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ດ້ວຍຄຸນນະພາບສູງ.

ໃນກອງປະຊຸມ ໄດ້ຮັບຟັງບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ.

**(ກົງທະນູຄຳ ພິພັດເສລີ)**

# ປະເມີນກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ ທີ່ແຂວງບໍ່ແກ້ວ



(ສພຊ) ເພື່ອເປັນບ່ອນອີງໃຫ້ການປະເມີນການຈັດຕັ້ງປະຕິບັດ ແລະ ການທາບທາມຮ່າງກົດໝາຍ 4 ສະບັບ ມີຄວາມເໝາະສົມກັບສະພາບຕົວຈິງ, ສອດຄ່ອງກັບກົດໝາຍ ແລະ ຮັບປະກັນປະສິດທິພາບ ແລະ ເປັນການລະດົມສະຕິປັນຍາ, ຄຳຄິດຄຳເຫັນທີ່ເປັນປະໂຫຍດຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືເປົ້າໝາຍທີ່ກ່ຽວຂ້ອງຕ່າງໆ ເພື່ອປັບປຸງກົດໝາຍ 4 ສະບັບໃຫ້ຄົບຖ້ວນ, ຮັດກຸມ ແລະ ແທດເໝາະກັບສະພາບຕົວຈິງ ກ່ອນນຳສະເໜີຕໍ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ. ໃນລະຫວ່າງວັນທີ 28-29 ສິງຫາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍ່ແກ້ວ, ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ຈັດກອງປະຊຸມການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ, ໂດຍການເຂົ້າຮ່ວມຂອງທ່ານ ຈອມສີ ລັດຕະນະປັນ ປະທານສະພາປະຊາຊົນແຂວງບໍ່ແກ້ວ, ມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ, ຄະນະປະຈຳພັກແຂວງ, ສະມາຊິກສະພາປະຊາຊົນແຂວງ, ພະນັກງານບຳນານ, ຫົວໜ້າ-ຮອງຫົວໜ້າພະແນກການອ້ອມຂ້າງແຂວງ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການຜ່ານບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ຜູ້ແທນກອງປະຊຸມ ໄດ້ຜັດປ່ຽນກັນຂຶ້ນປະກອບຄຳຄິດຄຳເຫັນຕໍ່ບົດປະເມີນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ແລະ ຕາມຄຳເຈາະຈີ້ມຂອງປະທານກອງປະຊຸມ ເພື່ອເຮັດໃຫ້ເນື້ອໃນກອງປະຊຸມມີຄວາມຮັດກຸມສອດຄ່ອງກັບສະພາບຄວາມເປັນຈິງໃນການປະຕິບັດ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນດ້ານງົບປະມານ ຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS).

**(ອານຸສອນ ພູມມີທອນ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II; ເຂົ້າຮ່ວມມີບັນດາທ່ານຄະນະນຳຂອງເມືອງ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ, ພະນັກງານ-ລັດຖະກອນ ຈາກພາກສ່ວນກ່ຽວຂ້ອງ ແລະ ນາຍບ້ານອ້ອມຂ້າງເມືອງ.

ໃນການເຄື່ອນໄຫວຄັ້ງນີ້, ໄດ້ຮັບການຕ້ອນຮັບຈາກທ່ານ ເສີດ ແສງສຸລິນ ເຈົ້າເມືອງງພຽງ ແຂວງໄຊຍະບູລີ ແລະ ລາຍງານໂດຍຫຍໍ້ກ່ຽວກັບສະພາບທີ່ຕັ້ງ ແລະ ຈຸດພິເສດຂອງເມືອງ, ດ້ານການເມືອງແນວຄິດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ, ດ້ານຂໍ້ຄົງຄ້າງ, ວຽກງານຈຸດສຸມໃນຕໍ່ໜ້າ; ຈາກນັ້ນ, ກອງປະຊຸມໄດ້ຮັບຟັງການເຜີຍແຜ່ຜົນສຳເລັດກອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ຈາກສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7.

ໂອກາດດັ່ງກ່າວ, ທ່ານ ພົທ. ສຸວອນ ເລືອງຄຳມີ ໄດ້ມີຄຳເຫັນໂອ້ລົມເຊິ່ງທ່ານໄດ້ຕີລາຄາສູງຕໍ່ຜົນງານຂອງເມືອງທີ່ຍາດມາໄດ້ໃນໄລຍະຜ່ານມາ ພ້ອມທັງໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX.

ໃນວັນດຽວກັນ, ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງໄດ້ເຄື່ອນໄຫວພົບປະກັບພໍ່ແມ່ປະຊາຊົນຢູ່ບ້ານນາໂສມ ເຊິ່ງຜ່ານການລົງພົບປະໃນຄັ້ງນີ້ ຜູ້ມີສິດເລືອກຕັ້ງໄດ້ສະເໜີດັ່ງນີ້: ສະເໜີຂໍໃຫ້ຄົ້ນຄວ້າງົບປະມານມາສົມທົບກໍ່ສ້າງ ແລະ ສ້ອມແປງເສັ້ນທາງປາກຊອງຫາບ້ານນາແອນ ເມືອງພຽງ; ການຄວບຄຸມລາຄານໍ້າມັນ, ໄຟຟ້າ, ນໍ້າປະປາ ແລະ ລາຄາສິນຄ້າທີ່ແພງຂຶ້ນ, ບັນຫາເງິນເຟີ້, ບັນຫາທາງດ້ານສາທາລະນະສຸກ ແລະ ຂໍເສັ້ນທາງປູຢາງເຂົ້າບ້ານນາໂສມ ແລະ ບັນຫາໄຟຟ້າບໍ່ພຽງພໍແຕ່ລາຄາພັດແພງຂຶ້ນ.

**(ສອນສັກ ວັນວິໄຊ)**



**ປະເມີນຜົນ...**

(ຕໍ່ຈາກໜ້າ 1)

ສະມາຊິກສະພາປະຊາຊົນແຂວງຈຳປາສັກ, ຫົວໜ້າ-ຮອງຫົວໜ້າພະແນກການຂອງອົງການປົກຄອງແຂວງຈຳປາສັກ, ຂົງເຂດຕຸລາການ, ຄະນະນຳຈາກ 2 ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຈົ້າເມືອງ-ເຈົ້ານະຄອນ ຈາກ 9 ເມືອງ, 1 ນະຄອນ, ສາມອົງການຈັດຕັ້ງມະຫາຊົນ, ຄະນະກຳມະການປະເມີນກົດໝາຍ, ສະຖາບັນການສຶກສາ, ພະນັກງານວິຊາທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນໂອກາດນີ້, ທ່ານ ສົມມາດ ພົລເສນາ ໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ນັບແຕ່ມີເທົ່າທີ່ຄວນ. ດັ່ງນັ້ນ, ປະຕິບັດຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບປັບປຸງປີ 2021 ແລະ ປະຕິບັດຕາມແຜນສ້າງ ແລະ ປັບປຸງກົດໝາຍ ຂອງສະພາແຫ່ງຊາດ ຊຸດທີ IX, ການປັບປຸງກົດໝາຍ 4 ສະບັບ ໃນຂົງເຂດສະພາແຫ່ງຊາດຄັ້ງນີ້ ພວກເຮົາຕ້ອງໄດ້ຄົ້ນຄວ້າລະອຽດ ດ້ານໂຄງສ້າງ ແລະ ເນື້ອໃນ ຂອງກົດໝາຍແຕ່ລະສະບັບໃຫ້ເປັນລະບົບ, ຊັດເຈນ ແລະ ຈະແຈ້ງ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ບັນດາກົດໝາຍ ແລະ ນິຕິກຳ. ເພື່ອເຮັດໃຫ້ກົດໝາຍດັ່ງກ່າວ ໄດ້ກາຍມາເປັນກົດໝາຍຂອງປະຊາຊົນ, ມາຈາກປະຊາຊົນ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ. ພາຍຫຼັງທີ່ກົດໝາຍດັ່ງກ່າວ ໄດ້ຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ບົດປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ. ບັນດາຜູ້ເຂົ້າຮ່ວມໄດ້ສຸມໃສ່ປະກອບຄຳຄິດເຫັນ ໃສ່ແຕ່ລະເນື້ອໃນມາດຕາຕ່າງໆຂອງກົດໝາຍ 4 ສະບັບ ຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມ ຢ່າງມີຈຸດສຸມ ແລະ ກົງໄປກົງມາ ເພື່ອຮັບປະ




ການສ້າງກົດໝາຍ 4 ສະບັບນີ້ ແຕ່ສະບັບທຳອິດເປັນຕົ້ນມາ ກໍໄດ້ຮັບການປັບປຸງເປັນແຕ່ລະໄລຍະມາຫຼາຍຄັ້ງແລ້ວ ໃນການປັບປຸງແຕ່ລະຄັ້ງ ກໍເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ນັບມື້ດີຂຶ້ນ ແລະ ສອດຄ່ອງກັບສະພາບໃນປັດຈຸບັນ. ແຕ່ເຖິງແນວໃດກໍຕາມ ຍັງເຫັນວ່າບໍ່ທັນສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳເທື່ອ ໂດຍສະເພາະແມ່ນຂັ້ນຕອນການປະເມີນການຈັດຕັ້ງປະຕິບັດ ແລະ ການທາບທາມກົດໝາຍ ທີ່ຍັງເຮັດບໍ່ທັນໄດ້ຢ່າງກວ້າງຂວາງ ແລະ ມີບາງດ້ານບໍ່ທັນໜັກແໜ້ນຖືກຮັບຮອງແລ້ວ ຈະກາຍເປັນເຄື່ອງມືສຳຄັນໃນການປະຕິບັດສິດ, ໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີຄຸນນະພາບສູງຂຶ້ນຕື່ມ ເປັນການປະກອບສ່ວນສຳຄັນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ຮັບປະກັນໃຫ້ສະຖຽນລະພາບທາງດ້ານການເມືອງ ມີຄວາມໜັກແໜ້ນ, ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ, ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍນັບມື້ມີຄວາມສັກສິດສູງຂຶ້ນ, ສັງຄົມມີຄວາມສະຫງົບ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ຈາກນັ້ນ, ຄະນະຮັບຜິດຊອບໄດ້ຜ່ານບົດປະເມີນການກັນໃຫ້ແກ່ການເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນໄລຍະໃໝ່ສາມາດຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນສູງກວ່າເກົ່າ ແນໃສ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ສູງຂຶ້ນ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນດ້ານງົບປະມານ ຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS).

**(ກົງໃຈ ແສງອຳພັນ)**

ກົມສື່ມວນຊົນ
ຄະນະເລຂາທິການ ສະພາແຫ່ງຊາດ
ຮ່ວມກັບ
ສະຖານີ ໂທລະພາບ
ປ້ອງກັນຄວາມສະຫງົບ (LAO PSTV)
ສະເໜີລາຍການ
"ກົດໝາຍເພື່ອປະຊາຊົນ"
ອອກອາກາດທາງສະຖານີ ໂທລະພາບ
ປ້ອງກັນຄວາມສະຫງົບ (LAO PSTV)
ທຸກໆ ວັນອາທິດ ເວລາ 7:30 - 8:00 ໂມງ
ແລະ ທຸກໆ ວັນພະຫັດ ເວລາ 21:00 - 21:30 ໂມງ

# ປະທານກຳມາທິການຍຸຕິທຳ ຕ້ອນຮັບຜູ້ອຳນວຍການມູນນິທິ ເວສມິນສະເຕີ



(ສພຊ) ວັນທີ 28 ສິງຫາ 2023 ທີ່ສະພາແຫ່ງຊາດແຫ່ງ ສປປ ລາວ, ທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ໄດ້ຕ້ອນຮັບທ່ານ ແມັດທິວ ເຮດ (Matthew Heges) ຜູ້ອຳນວຍການມູນນິທິ ເວສມິນສະເຕີ ປະຈຳຂົງເຂດ ອາຊີ-ປາຊີຟິກ ແລະ ອາເມລິກາ ພ້ອມດ້ວຍຄະນະ ທີ່ໄດ້ເດີນທາງມາຮ່ວມເຮັດວຽກນຳສະພາແຫ່ງຊາດ ໃນຄັ້ງນີ້.

ໂອກາດດັ່ງກ່າວ, ທ່ານ ຄຳແພງ ວິລະພັນ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບທ່ານ ແມັດທິວ ເຮດ ພ້ອມດ້ວຍຄະນະ ເຊິ່ງມີສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີໝາກຜົນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສະຫະລາດຊະອານາຈັກອັງກິດ ໄດ້ຮັບການພັດທະນາ ແລະ ເສີມຂະຫຍາຍຢ່າງບໍ່ຢຸດຢັ້ງ, ລັດຖະບານອັງກິດ ໄດ້ສຸມໃສ່ໃຫ້ການຊ່ວຍເຫຼືອ ສປປ ລາວ ໂດຍໄດ້ຖືເອົາເປົ້າໝາຍລວມຂອງແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານລາວ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອ ໂດຍສະເພາະການຊ່ວຍເຫຼືອແກ່ສະພາແຫ່ງຊາດລາວ ຜ່ານມູນນິທິເວດສມິນສະເຕີ ເພື່ອປະຊາທິປະໄຕ ຫຼື WFD ແມ່ນໄດ້ໃຫ້ການສະໜັບສະໜູນໂຄງການຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດລາວນັບຕັ້ງແຕ່ປີ 2017 ເປັນຕົ້ນມາ ໂດຍສະເພາະວຽກຂອງກຳມາທິການຍຸຕິທຳ, ກຳມາທິການກົດໝາຍ, ກຳມາທິການແຜນການການເງິນ ແລະ ການລົງທຶນ ແລະ ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ຮຽນສະເໜີມາຍັງສະພາແຫ່ງຊາດ ເພື່ອຂໍເຂົ້າຢ້ຽມຂໍ່ານັບການນຳຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ພົບປະກັບບັນດາກຳມາທິການສະພາແຫ່ງຊາດທີ່ມູນນິທິດັ່ງກ່າວໃຫ້ການສະໜັບສະໜູນ ພ້ອມທັງຖືໂອກາດເຂົ້າຮ່ວມຕິດຕາມກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດຂອງສະພາແຫ່ງຊາດ. ພິເສດ ແມ່ນການສະໜັບສະໜູນໃຫ້ພະນັກງານຂອງສະພາແຫ່ງຊາດ 2 ທ່ານ ເຂົ້າຮ່ວມກອງປະຊຸມໄອປາ ທີ່ປະເທດອິນໂດເນເຊຍ ໃນລະຫວ່າງວັນທີ 5-11 ສິງຫາ 2023 ທີ່ຜ່ານມາ ເພື່ອຖອດຖອນບົດຮຽນຮັບໃຊ້ໃຫ້ແກ່ກອງປະຊຸມລັດຖະສະພາອາຊຽນ (AIPA) ຄັ້ງທີ 45 ທີ່ ສປປ ລາວ ຈະເປັນເຈົ້າພາບ ໃນປີ 2024.

**(ກຸກກິກ ບຸດດາໄຊ)**

**ສຳເລັດ...**

(ຕໍ່ຈາກໜ້າ 1)

ຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ຕະຫຼອດໄລຍະ 2 ວັນ, ຜູ້ເຂົ້າຮ່ວມຈຳນວນ 146 ທ່ານ ໄດ້ສຸມສະຕິປັນຍາດ້ວຍຄວາມຮັບຜິດຊອບສູງ ປະກອບຄຳຄິດເຫັນຢ່າງເລິກເຊິ່ງ, ຫຼາກຫຼາຍ ເຊິ່ງເປັນພື້ນຖານໃຫ້ແກ່ການປັບປຸງບັນດາກົດໝາຍໃນຕໍ່ໜ້າ ຕໍ່ບັນດາມາດຕາຕາມຂໍ້ເຈາະຈີ້ມຂອງປະທານກອງປະຊຸມ ແລະ ບັນດາມາດຕາທີ່ເຫັນວ່າບໍ່ທັນຮັດກຸມ ໂດຍໄດ້ມີຜູ້ປະກອບຄຳເຫັນເກືອບ 40 ທ່ານຕໍ່ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ມີ 11 ທ່ານ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ມີ 15 ທ່ານ ແລະ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງມີ 13 ທ່ານ.

**(ປາກາລັກ ພົມມີໄຊ)**



# ສະພາປະຊາຊົນແຂວງໄຊສົມບູນ ປະເມີນນິຕິກຳໃຕ້ກົດໝາຍ

(ສພຊ) ສະພາປະຊາຊົນແຂວງໄຊສົມບູນ ພາຍໃຕ້ການນຳພາຂອງທ່ານ ພັອ. ວິໄຊທໍ່ ເພຍຫຼວງຈົ່ງເສີ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ຮອງປະທານສະພາປະຊາຊົນແຂວງໄຊສົມບູນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ 4 ສະບັບ ຢູ່ເມືອງທ່າໂທມ ແຂວງໄຊສົມບູນ ໃນລະຫວ່າງວັນທີ 18-31 ສິງຫາ 2023; ມີຄະນະນຳຂອງເມືອງ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ບັນດາຫ້ອງການອ້ອມຂ້າງເມືອງ, ອົງການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນພາຍໃນບ້ານເປົ້າໝາຍເຂົ້າຮ່ວມຈຳນວນຫຼາຍ.



ການປະເມີນໃນຄັ້ງນີ້ປະກອບມີນິຕິກຳ 4 ສະບັບ ຄື: ຂໍ້ຕົກລົງຂອງເຈົ້າແຂວງແຂວງໄຊສົມບູນວ່າດ້ວຍການຄຸ້ມຄອງສັດລ້ຽງ ສະບັບເລກທີ 951/ຈຂ.ຊບ, ລົງວັນທີ 10 ຕຸລາ 2018; ຂໍ້ຕົກລົງຂອງເຈົ້າແຂວງ ແຂວງໄຊສົມບູນ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 0161/ຈຂ.ຊບ, ລົງວັນທີ 7 ກຸມພາ 2020; ຂໍ້ຕົກລົງຂອງເຈົ້າແຂວງແຂວງໄຊສົມບູນ ວ່າດ້ວຍ ການກຳນົດຫົວໜ່ວຍລາຄາການຊົດເຊີຍທີ່ຖືກຜົນກະທົບຈາກບັນດາໂຄງການລົງທຶນຂອງລັດ ໃນຂອບເຂດທົ່ວແຂວງໄຊສົມບູນ ສະບັບປັບປຸງ ສະບັບເລກທີ 482/ຈຂ.ຊບ, ລົງວັນທີ 15 ພຶດສະພາ 2018 ແລະ ຂໍ້ຕົກລົງຂອງເຈົ້າແຂວງແຂວງໄຊສົມບູນ ວ່າດ້ວຍການກວດກາ-ກວດສອບມາດຕະຖານກົງເຕີໄຟຟ້າ, ກົງເຕີນ້ຳປະປາ, ຊິງຊັ່ງ ແລະ ຫົວປ້ຳຈຳໜ່າຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວແຂວງໄຊສົມບູນ ແລະ ເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າອຸປະກອນ ສະບັບເລກທີ 233/ຈຂ.ຊບ, ລົງວັນທີ 2 ມີນາ 2017.

ໃນກອງປະຊຸມໄດ້ຮັບຟັງການລາຍງານ ການຈັດຕັ້ງປະຕິບັດ ບັນດານິຕິກຳໃຕ້ກົດໝາຍຈາກອົງການປົກຄອງເມືອງ, ອົງການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນ ຜ່ານການຮັບຟັງການລາຍງານໃຫ້ຮູ້ວ່າ: ການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍຢູ່ບັນດາເມືອງ ແລະ ບ້ານ ສາມາດປະຕິບັດໄດ້ຮັບຜົນດີໃນຫຼາຍດ້ານ ບັນດານິຕິກຳເຫຼົ່ານັ້ນສາມາດນຳໃຊ້ເປັນບ່ອນອີງໃຫ້ອົງການຈັດຕັ້ງລັດ, ພໍ່ແມ່ປະຊາຊົນ, ຊາວກະສິກອນ, ນັກທຸລະກິດ ພໍ່ຄ້າຊາວຂາຍ ໃນການເຄື່ອນໄຫວວຽກງານການດຳເນີນທຸລະກິດຕ່າງໆ ໃຫ້ມີຄວາມສະດວກ ສອດຄ່ອງຕາມລະບຽບກົດໝາຍ, ສະພາບເສດຖະກິດ ແລະ ມີຄວາມຍຸຕິທຳໃນສັງຄົມ ເຊິ່ງບັນດາເນື້ອໃນຂອງນິຕິກຳທັງ 4 ສະບັບ ໄດ້ລະບຸຈະແຈ້ງກ່ຽວກັບລະບຽບການເຄື່ອນຍ້າຍສັດເຂົ້າ-ອອກແຂວງໄຊສົມບູນ, ການກຳນົດຫົວໜ່ວຍລາຄາການຊົດເຊີຍ ທີ່ຖືກຜົນກະທົບຈາກບັນດາໂຄງການລົງທຶນຂອງລັດ ຕໍ່ໄຮ່, ນາ, ຮົ້ວ, ສວນຂອງປະຊາຊົນ, ການກຳນົດລະບຽບ ແລະ ມາດຕະຖານກົງເຕີໄຟຟ້າ, ກົງເຕີນ້ຳປະປາ, ຊິງຊັ່ງ, ຫົວປ້ຳຈ່າຍນ້ຳມັນເຊື້ອໄຟ, ການຈຳໜ່າຍ ແລະ ການນຳໃຊ້ຢາປາບສັດຕູພືດ.

ເຖິງຢ່າງໃດກໍຕາມ, ຜ່ານການລົງປະເມີນຮ່ວມກັບອົງການປົກຄອງເມືອງ, ບ້ານ ແລະ ຮ່ວມສົນທະນາແລກປ່ຽນກັບພໍ່ແມ່ປະຊາຊົນໃນແຕ່ລະບ້ານ ເຫັນວ່າໃນຂອດການຈັດຕັ້ງປະຕິບັດນິຕິກຳຈຳນວນໜຶ່ງ ຍັງບໍ່ທັນລະອຽດຮັດກຸມ, ບາງມາດຕາ ຍັງບໍ່ທັນປະຕິບັດໄດ້ດີເທົ່າທີ່ຄວນ, ການກຳນົດຂໍ້ມູນ, ມູນຄ່າການຊົດເຊີຍ, ການກຳນົດຫົວໜ່ວຍລາຄາຕ່າງໆ ໃນບາງຂໍ້ຂອງບາງມາດຕາ ຈຳເປັນຕ້ອງໄດ້ຄົ້ນຄວ້າປັບປຸງໃຫ້ຖືກກັບສະພາບເສດຖະກິດ-ສັງຄົມໃນແຕ່ລະໄລຍະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ມີຄວາມຖືກຕ້ອງ ແລະ ໃຫ້ໄດ້ຮັບຄວາມຍຸຕິທຳ ພາຍໃນສັງຄົມ.

**(ພອນທະວີ ທຳມະໄທ)**

# ປະເມີນນິຕິກຳໃຕ້ກົດໝາຍ ຕິດພັນກັບການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ

(ສພຊ) ຕອນເຊົ້າຂອງວັນທີ 22 ສິງຫາ 2023 ສະພາປະຊາຊົນແຂວງສາລະວັນ ໄດ້ເຄື່ອນໄຫວຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ 4 ສະບັບ ຕິດພັນກັບການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງສາລະວັນ ຊຸດທີ II ຢູ່ທີ່ເມືອງສະໝ້ອຍ ແຂວງສາລະວັນ ນຳໂດຍທ່ານ ສີເຮັ່ງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 14, ປະທານສະພາປະຊາຊົນແຂວງ; ມີທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ, ບັນດາທ່ານຕາງໜ້າພະແນກການທີ່ກ່ຽວຂ້ອງ, ຄະນະນຳຂອງອົງການປົກຄອງເມືອງ ແລະ ບັນດາທ່ານຫົວໜ້າຫ້ອງການອ້ອມຂ້າງເມືອງ.



ການເຄື່ອນໄຫວໃນຄັ້ງນີ້ ກໍເພື່ອເປັນການຈັດຕັ້ງຜັນຂະຫຍາຍແຜນເຄື່ອນໄຫວຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 207/ຄຈສຂ.ສວ, ລົງວັນທີ 9 ສິງຫາ 2023 ກ່ຽວກັບການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ 4 ສະບັບ ຕິດພັນກັບການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຢູ່ 7 ຕົວເມືອງຄື: ເລົ່າງາມ, ວາປີ, ຄົງເຊໂດນ, ລະຄອນເພັງ, ຕຸ້ມລານ, ຕະໂອ້ຍ ແລະ ສະໝ້ອຍ ແລະ ກົດໝາຍວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021 ມາດຕາ 124 ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ.

ໃນທີ່ປະຊຸມ, ຕາງໜ້າຫ້ອງການທີ່ກ່ຽວຂ້ອງໄດ້ຂຶ້ນລາຍງານໂດຍຫຍໍ້ ກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ສະພາບການ ໃນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ 4 ສະບັບ ເປັນຕົ້ນແມ່ນຂໍ້ຕົກລົງວ່າດ້ວຍການກຳນົດເຂດປະເມີນລາຄາທີ່ດິນຢູ່ແຂວງສາລະວັນ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຂົນສົ່ງໂດຍສານ ແລະ ການຂົນສົ່ງສິນຄ້າທາງບົກຢູ່ພາຍໃນແຂວງສາລະວັນ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດຢູ່ແຂວງສາລະວັນ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຕະຫຼາດວັນນັດຢູ່ແຂວງສາລະວັນ. ຈາກນັ້ນ, ຜູ້ແທນກອງປະຊຸມໄດ້ແລກປ່ຽນຄົ້ນຄວ້າປຶກສາຫາລື ແລະ ຊີ້ແຈງຢ່າງເປັນເຈົ້າການຕໍ່ກັບຈຸດທີ່ພາໃຫ້ນິຕິກຳໃຕ້ກົດໝາຍຍັງບໍ່ທັນໄດ້ຜັນຂະຫຍາຍເຊື່ອມຊຶມໄດ້ຢ່າງກວ້າງຂວາງ ແລະ ຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດຂອງພະແນກການຂັ້ນແຂວງ, ຂັ້ນເມືອງ ແລະ ບັນຫາຕ່າງໆທີ່ພົບ ລ້ວນແຕ່ເປັນຂໍ້ເປັນມູນໃຫ້ພະແນກການທີ່ຮັບຜິດຊອບສ້າງນິຕິກຳໃຕ້ກົດໝາຍນຳໄປຄົ້ນຄວ້າ ແລະ ປັບປຸງເນື້ອໃນບາງມາດຕາຂອງນິຕິກຳໃຕ້ກົດໝາຍ ທີ່ອາດຍັງບໍ່ທັນສອດຄ່ອງກັບສະພາບຕົວຈິງຂອງສັງຄົມໃນປັດຈຸບັນ ແນໃສ່ຮັບປະກັນໃຫ້ນິຕິກຳໃຕ້ກົດໝາຍ ມີເນື້ອໃນຖືກຕ້ອງຕາມແນວທາງ, ແຜນນະໂຍບາຍຂອງພັກ ແລະ ນະໂຍບາຍຂອງລັດ ຕາມລັດຖະທຳມະນູນ, ກົດໝາຍ ໃຫ້ມີຄວາມສອດຄ່ອງກົມກຽວ, ໜັກແໜ້ນ ສາມາດນຳໄປຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ຕອນບ່າຍຂອງວັນດຽວກັນ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງປະຈຳເມືອງ ໄດ້ເຄື່ອນໄຫວພົບປະ ປະຊາຊົນຜູ້ມີສິດເລືອກຕັ້ງ ແລະ ໂຄສະນາເຜີຍແຜ່ມະຕິກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງສາລະວັນ ຊຸດທີ II ຢູ່ທີ່ຈຸດເທສະບານເມືອງສະໝ້ອຍ ໄດ້ເຊື່ອມຊຶມ, ຮັບຮູ້ ແລະ ເຂົ້າໃຈ ທັງເກັບກຳຄຳຄິດເຫັນ, ຄຳສະເໜີ, ຄວາມຂັດຂ້ອງໝອງໃຈຈາກຜູ້ມີສິດເລືອກຕັ້ງ ນຳໄປສະເໜີພາກສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄວ້າ, ປຶກສາຫາລືຊອກວິທີທາງແກ້ໄຂບັນຫາໂດຍໄວ ພ້ອມທັງແຈ້ງຜົນການແກ້ໄຂໃຫ້ຜູ້ມີສິດເລືອກຕັ້ງແຈ້ງຜົນຂອງການແກ້ໄຂໄດ້ຮັບຊາບ.

ການເຄື່ອນໄຫວໃນຄັ້ງນີ້ ໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກໂຄງການມູນິທິ ເອເຊຍ (ASIA FOUNDATION) ແລະ ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS).

**(ດີລຳພົນ ພົມມະຈັນ)**

# ສະພາປະຊາຊົນແຂວງ ອັດຕະປື ມີຄວາມພ້ອມຮັບໃຊ້ກອງປະຊຸມສະໄໝສາມັນເທື່ອທີ 5



ເພື່ອຮັບປະກັນໃນການກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງອັດຕະປື ຊຸດທີ II ໃຫ້ທ່ວງທັນກັບເວລາທີ່ກຳນົດ ແລະ ມີປະສິດທິພາບສູງ. ໃນວັນທີ 17 ສິງຫາ 2023. ສະພາປະຊາຊົນແຂວງ ໄດ້ຈັດກອງປະຊຸມກວດກາຄວາມພ້ອມໃນການກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງອັດຕະປື ຊຸດທີ II, ທີ່ຫ້ອງປະຊຸມຂອງຕົນ, ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ ອັດຕະປື ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນກອງປະຊຸມ, ໄດ້ຕີລາຄາ ແລະ ປະເມີນກວດກາຂໍ້ຄົງຄ້າງ ແລະ ຜົນສຳເລັດ ໃນການກະກຽມຮັບໃຊ້ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງອັດຕະປື ຊຸດທີ II ຂອງບັນດາອະນຸກຳມະການເຊັ່ນ: ອະນຸກຳມະການເນື້ອໃນ, ອະນຸກຳມະການກອງເລຂາ, ອະນຸກຳມະການພິທີການ ແລະ ຮັບແຂກ, ອະນຸກຳມະການບໍລິຫານ-ການເງິນ, ອະນຸກຳມະການປະຊາສຳພັນ ແລະ ສາຍດ່ວນ, ອະນຸກຳມະການປ້ອງກັນຄວາມສະຫງົບ



ແລະ ຮັກສາສຸຂະພາບ, ອະນຸກຳມະການແກະຄຳເຫັນຂອງຜູ້ແທນກອງປະຊຸມ ແລະ ອະນຸກຳມະການປະເມີນ ແລະ ໃຫ້ຄະແນນ ເຊິ່ງເຫັນໄດ້ວ່າ ຄວາມພ້ອມເທົ່າກັບ 85 %, ຄາດວ່າຈະດຳເນີນກອງປະຊຸມໃນທ້າຍເດືອນ ສິງຫາ 2023 ນີ້.

# ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ອັດລົງດ້ວຍຜົນສຳເລັດ

(ສພຊ) ພາຍຫຼັງທີ່ໄດ້ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II, ເປັນເວລາ 3 ວັນເຕັມ ນັບແຕ່ວັນທີ 23-25 ສິງຫາ 2023 ຢູ່ທີ່ຫໍວັດທະນະທຳນະຄອນໄກສອນ ໄດ້ອັດລົງດ້ວຍຜົນສຳເລັດຢ່າງສະຫງ່າງາມ ພາຍໃຕ້ການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍທ່ານ ປອ ນາງ ສູນທອນ ໄຊຍະຈັກ ຄະນະເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13, ທ່ານ ບຸນໂຈມ ອຸບົນປະເສີດ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງສະຫວັນນະເຂດ ມີບັນດາທ່ານ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13, ສະມາຊິກສະພາປະຊາຊົນແຂວງ, ບັນດາທ່ານການນຳຂອງແຂວງ, ຕາງໜ້າອົງການຈັດຕັ້ງພັກ-ລັດຂັ້ນແຂວງ, ອົງການແນວລ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ອົງການກວດສອບປະຈຳພາກກາງ II, ເຈົ້ານະຄອນໄກສອນ ພົມວິຫານ, ບັນດາທ່ານເຈົ້າເມືອງ, ຫົວໜ້າພະແນກການອ້ອມຂ້າງ, ອະດີດສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ຊຸດທີ VIII, ອະດີດສະມາຊິກສະພາປະຊາຊົນແຂວງ ຊຸດທີ I ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.




ປະທານກອງປະຊຸມໄດ້ກ່າວອັດກອງປະຊຸມຢ່າງເປັນທາງການວ່າ: ຈາກການດຳເນີນກອງປະຊຸມຄັ້ງນີ້ ຕີລາຄາໄດ້ວ່າ: ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແລະ ສະມາຊິກສະພາປະຊາຊົນແຂວງ ທີ່ໄດ້ສຸມສະຕິປັນຍາ, ເສີມຂະຫຍາຍສິດປະຊາທິປະໄຕ ເຂົ້າໃນການຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ອົງການປົກຄອງແຂວງ ກໍຄືພາກສ່ວນທີ່ກ່ຽວຂ້ອງ ໃນຖານະເປັນຕົວແທນແຫ່ງການປົກປ້ອງສິດຜົນປະໂຫຍດຂອງລັດ ແລະ ຂອງປະຊາຊົນບັນດາເຜົ່າ; ເຮັດໃຫ້ບັນດາເນື້ອໃນຕ່າງໆ ທີ່ນຳເຂົ້າພິຈາລະນາ, ຮັບຮອງເອົາບັນດາເນື້ອໃນໃຫ້ມີຄວາມເປັນເອກະພາບ ສອດຄ່ອງກັບກົດໝາຍ ເຮັດໃຫ້ສາມາດບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

ຜ່ານການຮັບຟັງການລາຍງານ, ການຄົ້ນຄວ້າ ແລະ ປະກອບຄຳເຫັນໃນແຕ່ລະບັນຫາຢ່າງຖີ່ຖ້ວນເລິກເຊິ່ງຂອງບັນດາທ່ານຜູ້ແທນ ສະນັ້ນ ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນຕ່າງໆ ດັ່ງນີ້:

1. ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ;

2. ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2023;

3. ກອງປະຊຸມໄດ້ພິຈາລະນາ, ຮັບຮອງການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ປະຈຳ 6 ເດືອນທ້າຍປີ 2023;

4. ກອງປະຊຸມໄດ້ພິຈາລະນາ, ຮັບຮອງການຮັບຮອງບົດລາຍງານການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ຂອງອົງການໄອຍະການປະຊາຊົນແຂວງ.

5. ກອງປະຊຸມໄດ້ພິຈາລະນາ, ຮັບຮອງ ການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ຂອງສານປະຊາຊົນແຂວງ.

6. ກອງປະຊຸມໄດ້ພິຈາລະນາ, ຮັບຮອງ ການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານໄລຍະກາງສະໄໝ ຂອງແຜນການ 5 ປີ (2021-2025), ທິດທາງແຜນການທ້າຍສະໄໝ; ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງສະພາປະຊາຊົນແຂວງ ຊຸດທີ II.

7. ກອງປະຊຸມໄດ້ລົງຄະແນນສຽງຮັບຮອງເອົາການແຕ່ງຕັ້ງ ທ່ານ ປອ. ວັນແສງ ແກ້ວບຸນພັນ ວ່າການຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ເປັນຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ;

ກອງປະຊຸມໄດ້ຮັບຮອງເອົາຜົນການປະເມີນຄວາມໄວ້ວາງໃຈໃນການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ຫຼື ຮັບຮອງເອົາການສະເໜີແຕ່ງຕັ້ງ ເຊິ່ງຜູ້ຖືກປະເມີນທັງໝົດ 36 ທ່ານ ໃນ 3 ຂົງເຂດ ແລະ ຜົນການປະເມີນ ໃນນັ້ນ, ຂົງເຂດສະພາປະຊາຊົນແຂວງ ມີ 16 ທ່ານ; ຈັດປະເພດດີມີ 16 ທ່ານ; ຂົງເຂດອົງການປົກຄອງແຂວງ ມີ 19 ທ່ານ; ຈັດປະເພດດີມີ 19 ທ່ານ.

ຂົງເຂດສານປະຊາຊົນແຂວງ ມີ 1 ທ່ານ; ຈັດປະເພດດີມີ 1 ທ່ານ. ນອກຈາກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການປະກອບຄຳເຫັນ ຈາກຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຕໍ່ກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດທິດທາງແຜນການທ້າຍສະໄໝ ແລະ ວຽກຈຸດສຸມ 6 ເດືອນຕົ້ນປີ 2023 ລະຫວ່າງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ, ອົງການປົກຄອງທ້ອງຖິ່ນ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ຕາມພາລະບົດບາດຂອງໃຜລາວ ໃຫ້ຄຽງຄູ່ກັນ ແລະ ເຂົ້າສູ່ລວງເລິກຕື່ມອີກ.

ກອງປະຊຸມໃນຄັ້ງນີ້ ຍັງໄດ້ຮັບຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ ມາຍັງກອງປະຊຸມ ຈຳນວນ 29 ສາຍ ທີ່ພົວພັນເຖິງການສະເໜີໃຫ້ພິຈາລະນາຕໍ່ການຊົດເຊີຍທີ່ດິນທີ່ຖືກໂຄງການພັດທະນາ, ການນະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ, ການເກັບຄ່າທຳນຽມ, ການສະເໜີເພື່ອກໍ່ສ້າງສ້ອມແປງເສັ້ນທາງຢູ່ບັນດາບ້ານ, ບັນດາເມືອງ ແລະ ບັນຫາອື່ນໆ ເຊິ່ງຢູ່ໃນຂົງເຂດປົກຄອງ 4 ສາຍ, ຂົງເຂດເສດຖະກິດ 17 ສາຍ ຂົງເຂດວັດທະນະທຳ-ສັງຄົມ 2 ສາຍ, ຂົງເຂດ ປກຊ-ປກສ 2 ສາຍ, ຂົງເຂດຍຸຕິທຳ 4 ສາຍ, ຕໍ່ກັບຄຳສະເໜີຄຳສະເໜີດັ່ງກ່າວນີ້ ສະພາປະຊາຊົນແຂວງ ຈະໄດ້ປະສານສົມທົບກັບອົງການ ແລະ ພະແນກການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ຊີ້ແຈງ ແລະ ຈະໄດ້ແຈ້ງຕອບເປັນລາຍລັກອັກສອນໃຫ້ແກ່ຜູ້ມີສິດເລືອກຕັ້ງໃນເວລາອັນຄວນ.



# ສສຊ ແລະ ສສນວ ພົບປະຜູ້ມີສິດເລືອກຕັ້ງເມືອງນາຊາຍທອງ ນວ




(ສພຊ) ໃນຕອນເຊົ້າຂອງວັນທີ 23 ສິງຫານີ້, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ (ນວ) ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ຢູ່ເມືອງນາຊາຍທອງ ນວ ນຳໂດຍທ່ານ ບຸນທາມ ພຸດທະວົງສາ ຮອງປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 1 ນວ, ຮອງປະທານ ສປນວ, ມີທ່ານ ພູວຽງ ເພຍເທບ ສສນວ ຊຸດທີ II, ຫົວໜ້າ ຄະນະ ສສນວ ປະຈຳເຂດເລືອກຕັ້ງເມືອງ, ປະທານກວດກາພັກ-ລັດ ເມືອງນາຊາຍທອງ ນວ ຢູ່ທີ່ວັດບ້ານນາຊາຍໃຕ້ ເຊິ່ງປະກອບມີຄະນະນຳຂອງບ້ານ 3 ບ້ານເຂົ້າຮ່ວມຄື: ນາຊາຍໃຕ້, ນາຊາຍກາງ ແລະ ນາຊາຍເໜືອ ເຂົ້າຮ່ວມຢ່າງພ້ອມພຽງ.

ການເຄື່ອນໄຫວພົບປະຄັ້ງນີ້, ແມ່ນເພື່ອພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 5 ສະພາແຫ່ງຊາດ ຊຸດທີ IX ແລະ ສປນວ ຊຸດທີ II ແລະ ເພື່ອຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງພໍ່ແມ່ປະຊາຊົນ ກໍຄືຜູ້ມີສິດເລືອກຕັ້ງ; ບັນດາທ່ານ ສສຊ ແລະ ສສນວ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງກອງປະຊຸມ ໂດຍເນັ້ນໃສ່ການຈັດຕັ້ງປະຕິບັດວຽກງານແຕ່ລະດ້ານໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າຂອງລັດຖະບານ, ອົງການປົກຄອງ ນວ, ຂົງເຂດຕຸລາການ, ຂອງສະພາແຫ່ງຊາດ ແລະ ສປນວ.

ໃນໂອກາດດັ່ງກ່າວ, ບັນດາທ່ານ ສສຊ ແລະ ສສນວ ກໍໄດ້ຮັບຟັງການລາຍງານ ສະພາບການຈັດຕັ້ງປະຕິບັດຂອງແຕ່ລະບ້ານ, ແລກປ່ຽນຄຳຄິດຄຳເຫັນກັບພໍ່ແມ່ປະຊາຊົນ, ຮັບຟັງບັນຫາທີ່ຂັດຂ້ອງໝອງໃຈຕ່າງໆ ໃນການດຳລົງຊີວິດຂອງພໍ່ແມ່ປະຊາຊົນ ພ້ອມທັງຮັບເອົາການສະເໜີແຕ່ລະບັນຫາເພື່ອນຳໄປສະເໜີຕໍ່ພາກສ່ວນກ່ຽວຂ້ອງຕິດຕາມກວດກາ ແລະ ພິຈາລະນາຫາທິດທາງແກ້ໄຂໃນຕໍ່ໜ້າ.



# ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ເຊກອງ ຊຸດທີ II ອັດລົງດ້ວຍຜົນສຳເລັດ



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ເລີ່ມໄຂຂຶ້ນໃນຕອນເຊົ້າວັນອັງຄານວັນທີ 22 ສິງຫາ 2023 ແລະ ດຳເນີນມາເຖິງຕອນບ່າຍວັນພະຫັດວັນທີ 24 ສິງຫາ 2023 ເຊິ່ງໄດ້ໃຊ້ເວລາດຳເນີນກອງປະຊຸມທັງໝົດ 3 ວັນເຕັມ ຈຶ່ງສຳເລັດຢ່າງສະຫງ່າງາມ ທີ່ສະໂມສອນສະພາປະຊາຊົນແຂວງເຊກອງ ພາຍໃຕ້ການເປັນປະທານຂອງທ່ານ ດົງເພັດ ພະຍົນ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍທ່ານ ເຫຼັກໄຫຼ ສີວິໄລ ເລຂາພັກແຂວງ, ເຈົ້າແຂວງເຊກອງ, ມີບັນດາການນຳພັກ-ລັດຂັ້ນແຂວງ, ອະດີດການນຳຂອງແຂວງ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ນັກທຸລະກິດ ແລະ ແຂກຖືກເຊີນເຂົ້າຮ່ວມ 100 ກວ່າທ່ານ.

ທ່ານ ດົງເພັດ ພະຍົນ ໄດ້ກ່າວປິດກອງປະຊຸມ ຢ່າງເປັນທາງການວ່າ: ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ ໂດຍໄດ້ພິຈາລະນາ ແລະ ຮັບຮອງເອົາຫຼາຍບັນຫາທີ່ສຳຄັນຂອງທ້ອງຖິ່ນ ໂດຍໄດ້ອອກເປັນມະຕິຂອງກອງປະຊຸມ ຈຳນວນ 12 ສະບັບຄື: ມະຕິຮັບຮອງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງທ້ອງຖິ່ນໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝຂອງແຂວງ; ມະຕິ ຮັບຮອງກ່ຽວການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງແຂວງ; ມະຕິຮັບຮອງກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝຂອງອົງການໄອຍະການແຂວງ; ມະຕິຮັບຮອງກ່ຽວກັບການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ຂອງອົງການໄອຍະການປະຊາຊົນແຂວງ; ມະຕິຮັບຮອງກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝຂອງສານປະຊາຊົນແຂວງ; ມະຕິຮັບຮອງກ່ຽວກັບການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ຂອງສານປະຊາຊົນແຂວງ; ມະຕິຮັບຮອງກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງ ແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝຂອງສະພາປະຊາຊົນແຂວງ ແລະ ມະຕິຮັບຮອງການຈັດຕັ້ງປະຕິບັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ຂອງສະພາປະຊາຊົນແຂວງ; ມະຕິຮັບຮອງເອົາຮ່າງຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງງົບປະມານການປະກອບສ່ວນຈາກຊຸມຊົນເຂົ້າໃນວຽກງານສຶກສາ ແລະ ມະຕິຮັບຮອງເອົາຮ່າງຂໍ້ຕົກລົງວ່າດ້ວຍການທົດແທນຄ່າເສຍຫາຍທີ່ຖືກຜົນກະທົບຈາກໂຄງການພັດທະນາພາຍໃນແຂວງເຊກອງ.

ນອກນີ້, ຍັງໄດ້ຮັບຟັງການລາຍງານ, ຊີ້ແຈງຕໍ່ຄຳຖາມເຈາະຈີ້ມ ແລະ ຄຳຊັກຖາມກັບທີ່ຂອງສະມາຊິກສະພາປະຊາຊົນແຂວງ ກໍຄືປະຊາຊົນບັນດາເຜົ່າຊາວແຂວງເຊກອງ ຈາກທ່ານເຈົ້າແຂວງ, ຮອງເຈົ້າແຂວງ ແລະ ຈາກ 10 ພາກສ່ວນ ຄື: ພະແນກແຜນການ ແລະ ການລົງທຶນແຂວງ, ພະແນກການເງິນແຂວງ, ພະແນກອຸດສະຫະກຳ ແລະ ການຄ້າແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ພະແນກສາທາລະນະສຸກແຂວງ, ພະແນກຍຸຕິທຳແຂວງ, ກອງບັນຊາການ ປກສ ແຂວງ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ທະນາຄານພັດທະນາລາວ.

**(ນາລີວັນ)**



# ປາຖະກະຖາວັນຍຶດອຳນາດທົ່ວປະເທດ 23 ສິງຫາ



(ສພຊ) ເມື່ອບໍ່ດົນມານີ້, ໜ່ວຍພັກສະພາປະຊາຊົນແຂວງອຸດົມໄຊ ໄດ້ປາຖະກະຖາວັນຍຶດອຳນາດທົ່ວປະເທດ 23 ສິງຫາ ໂດຍການເປັນປະທານຂອງສະຫາຍ ທອງຄານ ວັດສະດາກອນ ເລຂາໜ່ວຍພັກສະພາປະຊາຊົນແຂວງ, ມີສະຫາຍ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ສະຫາຍ ຄຳເພີຍ ງອນວັນຄຳ ກຳມະການປະຈຳພັກແຂວງ, ບັນດາສະຫາຍຄະນະພັກ, ສະມາຊິກພັກສົມບູນ-ສຳຮອງ ພາຍໃນໜ່ວຍພັກສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ເພື່ອເປັນການຈັດຕັ້ງປະຕິບັດຕາມແຈ້ງການຂອງຄະນະໂຄສະນາອົບຮົມແຂວງ, ສະຫາຍ ທອງຄານ ວັດສະດາກອນ ເລຂາໜ່ວຍພັກສະພາປະຊາຊົນແຂວງ, ໄດ້ນຳເອົາເອກະສານໂຄສະນາ-ປາຖະກະຖາວັນຍຶດອຳນາດທົ່ວປະເທດ 23 ສິງຫາ ຄົບຮອບ 78 ປີ ແລະ 45 ປີຄື: (23 ສິງຫາ 1945 ແລະ 23 ສິງຫາ 1975), ໂຄສະນາ-ປາຖະກະຖາໃຫ້ສະມາຊິກພັກ-ພະນັກງານ ພາຍໃນສະພາປະຊາຊົນແຂວງຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ປະຫວັດສາດແຫ່ງການຕໍ່ສູ້ຍາດເອົາເອກະລາດ, ອິດສະຫຼະພາບຂອງປະຊາຊົນລາວ ແລະ ນ້ຳໃຈຮັກຊາດ, ຈິດໃຈຕໍ່ສູ້ພິລະອາດຫານກ້າແກ່ນ, ທັດສະນະຫຼັກໝັ້ນອັນໜັກແໜ້ນ ແລະ ນ້ຳໃຈເສຍສະຫຼະອັນສູງສົ່ງຂອງປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ເພື່ອທັບມ້າງແອກຄອບຄອງຂອງພວກລ່າເມືອງຂຶ້ນແບບເກົ່າ-ໃໝ່ ແລະ ຖືເອົາໂອກາດລະນຶກວັນດັ່ງກ່າວນີ້ ເປັນການສຶກສາອົບຮົມພະນັກງານ, ສະມາຊິກພັກ ໃຫ້ມີນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ມີຄວາມເສຍສະຫຼະ, ປະກອບສ່ວນເຂົ້າໃນພາລະກິດປະຕິວັດ, ນຳເອົາບົດຮຽນດັ່ງກ່າວ ໝູນໃຊ້ເຂົ້າໃນການປັບປຸງໜ້າທີ່ວຽກງານໃຫ້ມີຄຸນນະພາບ ແລະ ປະສິດທິຜົນໃຫ້ນັບມື້ສູງຂຶ້ນ.

ພ້ອມນັ້ນ, ສະຫາຍ ນາງ ວັນສີ ພວງມະໄລ ຮອງເລຂາໜ່ວຍພັກສະພາປະຊາຊົນແຂວງ ໄດ້ຕາງໜ້າທາງຄະນະພັກ ສືບຕໍ່ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວນຳພາ-ຊີ້ນຳຂອງຄະນະໜ່ວຍພັກສະພາປະຊາຊົນແຂວງ ປະຈຳເດືອນສິງຫາ ແລະ ວາງທິດທາງແຜນການເດືອນກັນຍາ 2023. ຫຼັງຈາກນັ້ນ, ບັນດາສະຫາຍສະມາຊິກພັກ ໄດ້ປະກອບຄຳຄິດຄຳເຫັນຕໍ່ເນື້ອໃນຂອງຮ່າງບົດສະຫຼຸບດັ່ງກ່າວຢ່າງກົງໄປກົງມາ, ຕຳນິສົ່ງຂ່າວເຊິ່ງກັນແລະກັນ, ຕີລາຄາຄືນໃນການນຳພາ-ຊີ້ນຳຂອງຄະນະໜ່ວຍພັກສະພາປະຊາຊົນແຂວງຜ່ານມາ, ເຫັນໄດ້ດ້ານດີຜົນງານ, ຂໍ້ຄົງຄ້າງ ແລະ ເພື່ອຊອກຫາວິທີທາງແກ້ໄຂໃນຕໍ່ໜ້າ.

**(ສະພາປະຊາຊົນແຂວງ)**

# ໄລຍະທ້າຍສະໄໝ ແຂວງເຊກອງ ສຸມໃສ່ພັດທະນາເສດຖະກິດ ໃຫ້ຂະຫຍາຍຕົວເພີ່ມຂຶ້ນ

ໃນໄລຍະທ້າຍສະໄໝແຂວງເຊກອງຈະສຸມໃສ່ພັດທະນາເສດຖະກິດໃຫ້ຂະຫຍາຍຕົວເພີ່ມຂຶ້ນໃນລະດັບ 5% ຕໍ່ປີ ແລະ ຮອດປີ 2025 ເຮັດໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ບັນລຸ 2.790 ຕື້ກີບ, ສະເລ່ຍຕໍ່ຫົວຄົນໄດ້ 19,73 ລ້ານກີບຕໍ່ຄົນຕໍ່ປີ ໃນນີ້, ຂະແໜງກະສິກຳຂະຫຍາຍຕົວເພີ່ມຂຶ້ນ 6,4% ກວມເອົາ 44,18%, ຂະແໜງອຸດສາຫະກຳເພີ່ມຂຶ້ນ 4,35% ກວມເອົາ 22,38% ແລະ ຂະແໜງບໍລິການເພີ່ມຂຶ້ນ 3,62% ກວມເອົາ 33,43% ຂອງ GDP.



ທ່ານ ສາກົນ ພອນປະເສີດ ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ລາຍງານໃຫ້ຮູ້ໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງເຊກອງ ຊຸດທີ II ໃນວັນທີ 22 ສິງຫາ 2023 ວ່າ: ທິດທາງແຜນການ ແລະ ແຜນວຽກຈຸດສຸມໃນໄລຍະ 2 ປີເຄິ່ງທ້າຍສະໄໝ ແຂວງເຊກອງຈະສືບຕໍ່ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ, ປັບປຸງອຳນາດລັດໃຫ້ມີຄວາມເຂັ້ມແຂງ; ສຸມໃສ່ຂະຫຍາຍຖານການຜະລິດ, ຊຸກຍູ້ສົ່ງເສີມການຜະລິດກະສິກຳເປັນສິນຄ້າໃຫ້ກວ້າງຂວາງ; ປັບປຸງກົນໄກການເກັບລາຍຮັບ-ຄຸ້ມຄອງລາຍຈ່າຍ, ຕ້ານການຮົ່ວໄຫຼງົບປະມານ, ຄຸ້ມຄອງບັນດາຫົວໜ່ວຍທຸລະກິດທີ່ສູນກາງມອບໃຫ້ທ້ອງຖິ່ນຈັດເກັບໃຫ້ໄດ້ຕາມແຜນການທີ່ວາງໄວ້; ສົ່ງເສີມການສ້າງ ແລະ ດຳເນີນທຸລະກິດ SME ໃໝ່, ຊຸກຍູ້ການປະຕິບັດນະໂຍບາຍພາສີ-ອາກອນ, ນະໂຍບາຍສິນເຊື່ອໃຫ້ແກ່ຈຸລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ-ກາງໃຫ້ທົ່ວເຖິງ; ສົ່ງເສີມການແປຮູບຜະລິດຕະພັນກະສິກຳ, ສ້າງຕັ້ງໂຮງງານປຸງແຕ່ງທົ່ວໄປ ເພື່ອສ້າງແຮງກະຕຸ້ນໃຫ້ລວມຍອດຜະລິດຕະພັນອຸດສາຫະກຳຂະຫຍາຍຕົວເພີ່ມຂຶ້ນ; ຊຸກຍູ້ສົ່ງເສີມຫັດຖະກຳທີ່ເປັນເອກະລັກ, ຫັດຖະກຳທີ່ເປັນທ່າແຮງພື້ນຖານ; ພັດທະນາຊັບພະຍາກອນມະນຸດ, ພັດທະນາສີມືແຮງງານ, ສ້າງວຽກເຮັດງານທຳໃຫ້ປະຊາຊົນ ແລະ ຫັນພະນັກງານລົງກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແລະ ວຽກງານ 3 ສ້າງ ກໍຄືການສ້າງບ້ານ-ກຸ່ມບ້ານພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ, ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງໃນຊົນນະບົດໃຫ້ໄດ້ຕາມເປົ້າໝາຍ.

ພ້ອມນີ້, ກໍເອົາໃຈໃສ່ປັບປຸງຫ້ອງການ ແລະ ກົນໄກການບໍລິການຜ່ານປະຕູດຽວ ເພື່ອສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍໃນການສ້າງ ແລະ ດຳເນີນທຸລະກິດໃຫ້ວ່ອງໄວ; ສືບຕໍ່ດຶງດູດການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ຕາມແຜນການ, ຍາດແຍ່ງການຊ່ວຍເຫຼືອຈາກເພື່ອມິດຍຸດທະສາດ ແລະ ອົງການຈັດຕັ້ງສາກົນ; ຕິດຕາມ, ກວດກາ ແລະ ຊຸກຍູ້ໂຄງການພັດທະນາພື້ນຖານໂຄງລ່າງທີ່ເຫັນວ່າມີຄວາມຄືບໜ້າ ແລະ ໃກ້ສຳເລັດ ແລະ ສ້າງໂຄງການໃໝ່ໃຫ້ສອດຄ່ອງກັບເປົ້າໝາຍ ແລະ ແຜນງານບູລິມະສິດຂອງແຂວງ ກໍຄື ຂະແໜງການວາງໄວ້.

**ໂດຍ: ສົມຍາ ແລະ ນາລີວັນ**






# ກົດໝາຍ ວ່າດ້ວຍວິຈິດສິນ

ຕໍ່ຈາກສະບັບກ່ອນ

5. ປຸກລະດົມ, ຂົນຂວາຍ, ຊອກແຫຼ່ງທຶນ ເພື່ອເຄື່ອນໄຫວກິດຈະກຳກ່ຽວກັບວິຈິດສິນ;

6. ຄົ້ນຄວ້າ ແລະ ສະເໜີໃຫ້ນາມມະຍົດສິລະປິນວິຈິດສິນ ຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

7. ສະເໜີການປະຕິບັດນະໂຍບາຍ ຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານ ແລະ ປະຕິບັດມາດຕະການຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວບໍ່ຖືກຕ້ອງກ່ຽວກັບວິຈິດສິນຕາມກົດໝາຍ;

8. ພົວພັນ, ຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານວິຈິດສິນ;

9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານວິຈິດສິນ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກ ກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VIII
## ຂໍ້ຫ້າມ

**ມາດຕາ 72 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳເອົາຜົນງານດ້ານວິຈິດສິນເປັນເຄື່ອງມືໃນການເຄື່ອນໄຫວ, ໂຄສະນາບິດເບືອນ ແນວທາງ ນະໂຍບາຍ, ກົດໝາຍ ໃສ່ຮ້າຍ ປ້າຍສີ, ຍຸແຍ່, ແບ່ງແຍກ ຄວາມສາມັກຄີປອງດອງລະຫວ່າງບັນດາເຜົ່າ, ສາສະໜາ ແລະ ມ້າງເພ, ທຳລາຍມູນເຊື້ອສິລະປະວັດທະນະທຳ ອັນດີງາມຂອງຊາດ, ຂອງເຜົ່າ;

2. ນຳເອົາສິລະປະດ້ານວິຈິດສິນທີ່ ເສື່ອມຊາມ, ຊອດກະຈາ, ລາມົກ, ອະນາຈານ ແລະ ສິ່ງອື່ນ ທີ່ຜິນຮີດຄອງປະເພນີອັນດີງາມ ມາຈັດຕັ້ງເຜີຍແຜ່ໃນ ສປປ ລາວ, ຍຸຍົງ ສົ່ງເສີມເພື່ອເມົາກໍ່ໃຫ້ເກີດຄວາມຮຸນແຮງ, ອາຊະຍາກຳ, ສິ່ງເສບຕິດ, ການພະນັນ ແລະ ການເຊື່ອຖືງົມງາຍ;

3. ທຳລາຍພຣະພຸດທະຮູບ, ຜົນງານດ້ານວິຈິດສິນປະເພດຕ່າງໆ ທີ່ເປັນມູນເຊື້ອ, ສາສະນະສະຖານ ແລະ ສະຖານທີ່ປະຫວັດສາດ;

4. ລັກໂລບ, ສໍ້ໂກງເອົາຜົນງານດ້ານວິຈິດສິນຂອງຜູ້ອື່ນໄປເປັນຂອງຕົນ, ຮຽນແບບ, ກ່າຍ ຫຼື ລອກແບບ, ດັດແປງຜົນງານດ້ານວິຈິດສິນທຸກປະເພດ ໂດຍບໍ່ໄດ້ຮັບອະນຸຍາດ;

5. ລັກລອບ ຊື້ ຂາຍ, ແລກປ່ຽນ ຫຼື ມອບເປັນຂອງຂວັນຜົນງານວິຈິດສິນທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ທີ່ເປັນຕົ້ນສະບັບ;

6. ນຳເອົາຜົນງານດ້ານວິຈິດສິນທຸກປະເພດ ທີ່ບໍ່ຜ່ານການກວດກາອອກໄປເຄື່ອນໄຫວ, ວາງສະ ແດງ ຫຼື ເຜີຍແຜ່ຜ່ານສື່ມວນຊົນ ຢູ່ພາຍໃນ ແລະ ຕ່າງປະເທດ;

7. ເຄື່ອນໄຫວວາງສະແດງຕາມສະຖານທີ່ຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 73 ຂໍ້ຫ້າມ ສຳລັບພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສົມຮູ້ຮ່ວມຄິດກັບນັກສິລະປິນວິຈິດສິນ ຫຼື ຜູ້ດຳເນີນທຸລະກິດກ່ຽວກັບວິຈິດສິນ ປອມແປງລາຍເຊັນເຈົ້າຂອງຜົນງານດ້ານວິຈິດສິນ ລວມທັງການປອມແປງສັນຍາລັກອື່ນທີ່ກ່ຽວຂ້ອງ;

2. ກົດໜ່ວງຖ່ວງດຶງເອກະສານ, ຕິວະຍົວະ, ຫຼອກລວງ, ສໍ້ໂກງ, ນາບຂູ່ ນັກສິລະປິນວິຈິດສິນ ແລະ ຜູ້ດຳເນີນທຸລະກິດກ່ຽວກັບວິຈິດສິນ ເພື່ອສະແຫວງຫາຜົນປະໂຫຍດ ໃຫ້ຕົນເອງ, ຄອບຄົວ ແລະ ພັກພວກ;

3. ສວຍໃຊ້ ສິດ, ໜ້າທີ່ ຫຼື ຕຳແໜ່ງ ແລະ ບັງຄັບ ຫຼື ຮຽກຮ້ອງເອົາສິນບົນ ເພື່ອຜົນປະໂຫຍດສ່ວນຕົວ, ພີ່ນ້ອງ ແລະ ໝູ່ເພື່ອນ;

4. ນຳໃຊ້, ດັດແປງ, ປັບປຸງເນື້ອໃນ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຂອງຜະລິດຕະພັນ, ຜົນງານດ້ານວິຈິດສິນ, ການເຄື່ອນໄຫວຂອງນັກສິລະປິນວິຈິດສິນ ໂດຍບໍ່ໄດ້ຮັບອານຸຍາດ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 74 ຂໍ້ຫ້າມ ສຳລັບຜູ້ດຳເນີນທຸລະກິດກ່ຽວກັບວິຈິດສິນ**

ຫ້າມຜູ້ດຳເນີນທຸລະກິດກ່ຽວກັບວິຈິດສິນ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບວິຈິດສິນ ໂດຍບໍ່ໄດ້ຮັບອະນຸຍາດ;

2. ລັກໂລບ, ສໍ້ໂກງ ເອົາກຳມະສິດ, ລິຂະສິດ, ຜົນງານດ້ານວິຈິດສິນ ຂອງຜູ້ອື່ນມາເປັນຂອງຕົນເອງ ຫຼື ໂຄສະນາ ເຜີຍແຜ່ ໂດຍບໍ່ໄດ້ຮັບການເຫັນດີຈາກເຈົ້າຂອງ ກຳມະສິດ, ລິຂະສິດ ແລະ ການອະນຸຍາດຂອງອົງການຄຸ້ມຄອງທີ່ກ່ຽວຂ້ອງ;

3. ນຳເອົາຜະລິດຕະພັນວິຈິດສິນ ທັງພາຍໃນ ແລະ ຕ່າງປະເທດ ທຸກປະເພດໂດຍບໍ່ໄດ້ຮັບອະນຸຍາດ ໄປດຳເນີນທຸລະກິດ, ເຄື່ອນໄຫວ ໂຄສະນາ ເຜີຍແຜ່ ຜ່ານສື່ມວນຊົນ, ສື່ສັງຄົມ ທັງພາຍໃນ ແລະ ຕ່າງ ປະເທດ;

4. ຊື້ຈ້າງ, ໃຫ້ສິນບົນ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ IX
## ການຄຸ້ມຄອງ ແລະ ການກວດກາ ວຽກງານວິຈິດສິນ
### ໝວດທີ 1
### ການຄຸ້ມຄອງວຽກງານວິຈິດສິນ

**ມາດຕາ 75 ອົງການຄຸ້ມຄອງວຽກງານວິຈິດສິນ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານວິຈິດສິນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານວິຈິດສິນ ປະກອບດ້ວຍ:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;

3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 76 ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານວິຈິດສິນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວິຈິດສິນ ເພື່ອສະເໜີລັດຖະບານພິຈາລະນາ;

2. ຫັນຂະຫຍາຍ ແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ໃຫ້ເປັນແຜນການ, ແຜນງານ, ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວິຈິດສິນໃນຂອບເຂດທົ່ວປະເທດ;

4. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນດ້ານວິຈິດ;

5. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານວິຈິດສິນ;

6. ຊີ້ນຳ ການກວດກາຜົນງານ ແລະ ຜະລິດຕະພັນດ້ານວິຈິດສິນ;

7. ຮັບຄຳຮ້ອງ ແລະ ພິຈາລະນາຂຶ້ນທະບຽນ ວິຈິດສິນລະດັບຊາດ;

8. ອະນຸຍາດ, ໂຈະ ຫຼື ຖອນ ການອະນຸຍາດດຳເນີນທຸລະກິດກ່ຽວກັບວິຈິດສິນ;

9. ກວດຜ່ານ ແລະ ອະນຸຍາດ ກ່ຽວກັບການກໍ່ສ້າງ ສາສະນະສະຖານ, ພຣະພຸດທະຮູບ ແລະ ອະນຸ ສາວະລີ ດ້ານວິຈິດສິນ;

10. ພິຈາລະນາ ການຄົ້ນຄວ້າ ແລະ ສະເໜີ ການໃຫ້ນາມມະຍົດຂອງສະມາຄົມວິຈິດສິນລາວ; ຄົ້ນຄວ້າ ແລະ ສະເໜີການໃຫ້ນາມມະຍົດສິລະປິນວິຈິດສິນ ຕໍ່ລັດຖະບານ;

11. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານວິຈິດສິນ;

12. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມກວດກາ ແລະ ສົ່ງເສີມວຽກງານວິຈິດສິນ;

13. ພົວພັນ, ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານວິຈິດສິນ;

14. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານວິຈິດສິນ ໃຫ້ລັດຖະບານ ຢ່າງເປັນປົກ ກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 77 ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານວິຈິດສິນພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວິຈິດສິນ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານວິຈິດສິນ;

3. ຂຶ້ນແຜນກຳນົດບຳລຸງ ແລະ ສ້າງພະນັກງານ-ລັດຖະກອນ ທີ່ເຮັດວຽກງານວິຈິດສິນ ເພື່ອຍົກສູງ ຄວາມຮູ້, ຄວາມສາມາດທາງດ້ານການເມືອງ, ວັດທະນະທຳ ແລະ ວິຊາສະເພາະ;

4. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານວິຈິດສິນ;

5. ຊີ້ນຳ ການກວດກາຜົນງານ ແລະ ຜະລິດຕະພັນດ້ານວິຈິດສິນ;

6. ຮັບຄຳຮ້ອງ ແລະ ພິຈາລະນາການຂຶ້ນທະບຽນ ວິຈິດສິນລະດັບທ້ອງຖິ່ນ;

7. ອະນຸຍາດ, ໂຈະ ຫຼື ຖອນ ການອະນຸຍາດດຳເນີນທຸລະກິດກ່ຽວກັບວິຈິດສິນ;

8. ກວດຜ່ານ ແລະ ອະນຸຍາດ ກ່ຽວກັບການກໍ່ສ້າງສາສະໜາສະຖານ, ພຣະພຸດທະຮູບ ແລະ ອະນຸ ສາວະລີ ດ້ານວິຈິດສິນທີ່ຕັ້ງຢູ່ພາຍໃນ ແຂວງ, ນະຄອນຫຼວງ;

9. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການ ຈັດຕັ້ງປະຕິບັດວຽກງານວິຈິດສິນ;

10. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ສົ່ງເສີມວຽກງານວິຈິດສິນ;

11. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານວິຈິດສິນ ໃຫ້ກະຊວງຖະແຫຼງຂ່າວ, ວັດ ທະນະທຳ ແລະ ທ່ອງທ່ຽວ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 78 ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ**

ອ່ານຕໍ່ສະບັບໜ້າ




# ກ້າວຂ້າມອຸປະສັກ

# ດັ້ນກິບເມກ



ເຖິງແມ່ນວ່າ ສະພາບການຂອງກະແສໂລກຈະຢູ່ໃນສະຖານະການໃດກໍຕາມ ຊີວິດຄົນເຮົາກໍຍັງພົບອຸປະສັກຄືເກົ່າ ເຊິ່ງອາດຕ່າງພຽງແຕ່ເງື່ອນໄຂໜັກເບົາຕ່າງກັນ; ສະຖານະການປັດຈຸບັນ ເສດຖະກິດຝືດເຄືອງ ຟື້ນໂຕໄດ້ຍາກ; ຫາກິນລຳບາກ ລາຍໄດ້ບໍ່ຄືເກົ່າຫຼຸດລົງຫຼາຍຮູບແບບ; ເງື່ອນໄຂຂອງເສດຖະກິດຝືດ; ລາຍໄດ້ບໍ່ໝັ້ນຄົງ ມັນສອນບົດຮຽນຊີວິດວ່າ ຢ່າປະໝາດ ເມື່ອຫາໄດ້ກໍຕ້ອງຮູ້ຈັກແບ່ງໃຊ້ຈ່າຍ...

ຄົນທີ່ຮູ້ຈັກໃຊ້ສະຕິປັນຍາ ຄວບຄຸມອາລົມຕົນເອງ ໃຫ້ຮູ້ຈັກປະຢັດໃຊ້ຈ່າຍໃນຍາມເສດຖະກິດຝືດເຄືອງເທົ່ານັ້ນ ຊີວິດຈຶ່ງຈະພົບຄວາມສຸກໄດ້ ແຕ່ກົງກັນຂ້າມ ອາດມີບາງຄົນໃຊ້ຊີວິດໃນກະແສບໍລິໂພກນິຍົມ ຫາເພື່ອທ່ຽວເພື່ອກິນ ບາດເຖິງເວລາຕົກອັບ ບໍ່ມີແຜນສຳຮອງ-ບໍ່ມີເງິນປະຢັດໃຊ້ຈ່າຍຍາມຈຳເປັນ ຈະພົບທາງຫຍຸ້ງຍາກທັນທີ ເຊິ່ງບາງຄົນກໍຫາທາງອອກແບບໃຊ້ວິທີຕິດໜີ້ຢືມສິນ... ເຊົ້າທຳນອງ ຢືມທ້າວກໍເພື່ອຈ່າຍທ້າວ ຂໍເພື່ອຮັກສາໜ້າໄວ້ ແຕ່ບາງຄົນກໍເລືອກໃຊ້ວິທີ 18 ມຸງກຸດ ເພື່ອເອົາໂຕລອດກໍມີ.

ທາງລອດໃນຍາມເສດຖະກິດຝືດ, ຟື້ນໂຕຍາກ ເຮົາຕ້ອງຫັນມາເພິ່ງພາການຫຼຸດຜ່ອນການໃຊ້ຈ່າຍທີ່ບໍ່ຈຳເປັນ ແລະ ຮູ້ຈັກປັບປ່ຽນພຶດຕິກຳຊີວິດໃຊ້ຈ່າຍຂາດເຫດຜົນພຽງພໍ ຜູ້ຂຽນຄິດວ່າ: ຖ້າໃຜມີດິນສວນດິນນາ ຈະໄດ້ປຽບໃນການເລືອກທາງເສດຖະກິດ ປູກຝັງເປັນທາງຊ່ວຍແກ້ໄຂເສດຖະກິດຝືດເຄືອງເຊັ່ນ: ການຈົກໜອງລ້ຽງປາ-ການປູກຜັກ-ປູກຕົ້ນໄມ້ໃຫ້ໝາກ ຜົນອາດໃຊ້ເວລາແນ່ ກໍຖືວ່າເປັນທາງໝັ້ນຄົງປອດໄພ ທັງໄລຍະສັ້ນ ແລະ ຍາວ ເພາະເຮົາຈະໄດ້ເພິ່ງພາອາໄສ ຜົນຈາກການປູກຝັງ ຄືດັ່ງທີ່ພໍ່ແມ່ເຮົາເຄີຍພາເຮັດມາກ່ອນ; ຖ້າວ່າການໃຊ້ຊີວິດ ແບກຫາບພາລະໜັກໃນການໃຊ້ຈ່າຍເກີນໄປ ກໍຕ້ອງຮູ້ຈັກຕັດຮອນອັນບໍ່ຈຳເປັນອອກ ເຊິ່ງມີສຸພາສິດລາວເຕືອນໄວ້ວ່າ: ເຫັນຊ້າງຂີ້ຢ່າຂີ້ຕາມຊ້າງ, ນົກນ້ອຍເຮັດຮັງຕາມກຳລັງ..., ຖ້າວ່າໃຜຫາກເຮັດເອົາໜ້າ ສ້າງໜີ້ເກີນກຳລັງຈ່າຍ ກໍຈະພົບບັນຫາທັນທີ ແຜ່ລາມໃສ່ຍາດພີ່ນ້ອງຄອບຄົວ.

ການຈະຂ້າມຜ່ານຍຸກເສດຖະກິດຝືດເຫັນວ່າກະເສດ ແມ່ນທາງອອກໜຶ່ງທີ່ສຳຄັນ ຊ່ວຍເຮົາໄດ້, ຮູ້ຈັກປູກກິນ, ຜົນຂອງການປູກດ້ວຍໂຕເຮົາເອງ ຍັງປອດໄພນຳອີກ, ບໍ່ເຮັດໜ້າໃຫຍ່ເກີນໂຕ, ຮູ້ຈັກປ່ອຍວາງ ຮູ້ຈັກປັບປ່ຽນຊີວິດຈະມີຄວາມສຸກ!

# ປົມໃນໃຈ

**ໂດຍ: ບົງເອີນ**

ປັດຈຸບັນ ພວມຢູ່ໃນວາລະເປີດສົກຮຽນໃໝ່ ເຊິ່ງປຽບເໝືອນປາງບຸນໃຫຍ່ທົ່ວປະເທດ ສະນັ້ນ, ຜູ້ຂຽນຈຶ່ງນຳເອົາບົດທີ່ກ່ຽວກັບເດັກ ກ່ຽວກັບແມ່ ແລະ ລູກ ມານຳສະເໜີ ເພາະເຊື່ອວ່າແມ່ຫຼາຍໆຄົນເຄີຍມີຄວາມຮູ້ສຶກຜິດຕໍ່ລູກບໍ່ຫຼາຍກໍໜ້ອຍ ບາງທີອາດມີແມ່ບາງຄົນທີ່ມີຄວາມຮູ້ສຶກຜິດຕໍ່ລູກຢູ່ເລິກໆພາຍໃນໃຈຕະຫຼອດເວລາ ອາດຈະຮູ້ສຶກຜິດທີ່ຕ້ອງປ່ອຍໃຫ້ລູກຢູ່ກັບຄົນອື່ນ, ຮູ້ສຶກຜິດທີ່ບໍ່ມີເວລາຫຼິ້ນກັບລູກ, ຮູ້ສຶກຜິດເວລາຮູ້ສຶກເມື່ອຍແລ້ວຫຼົງຮ້າຍ ຫຼື ຕີລູກ ແລະອື່ນໆ; ດັ່ງນັ້ນ, ບົດຄວາມນີ້ ບັນດາແມ່ໆ ລອງມາຊອກຮູ້ຕົ້ນຕໍຂອງຄວາມຮູ້ສຶກຜິດ ແລະ ປະເຊີນໜ້າກັບຄວາມຮູ້ສຶກນີ້ຢ່າງກ້າຫານ ເພື່ອຈະສາມາດເອົາຊະນະຄວາມຮູ້ສຶກຜິດຢູ່ໃນໃຈ ເພື່ອເປັນແມ່ທີ່ມີຄວາມສຸກໃນການລ້ຽງລູກ.

ຄວາມຮູ້ສຶກຜິດຂອງແມ່ອາດເກີດຂຶ້ນຈາກຄວາມຄາດຫວັງໃນບົດບາດຂອງການເປັນແມ່ເອງ ເຊິ່ງຄວາມຄາດຫວັງນັ້ນອາດຈະມາຈາກບັນທັດຖານທາງສັງຄົມ ທີ່ກຳນົດມາດຕະຖານຂອງຄວາມເປັນແມ່ໄວ້ ຕົວຢ່າງ: ແມ່ຕ້ອງລ້ຽງລູກດ້ວຍນົມແມ່ຢ່າງໜ້ອຍ 6 ເດືອນ, ຕ້ອງຫຼິ້ນກັບລູກຕະຫຼອດເວລາ, ຫ້າມເມື່ອຍ, ຫ້າມພັກຜ່ອນ ແລະ ສົມບູນແບບທີ່ສຸດ ຄົນທີ່ວາງມາດຕະຖານເຫຼົ່ານີ້ເພື່ອເອົາຊະນະຕົນເອງຕະຫຼອດແຕ່ເມື່ອມັນບໍ່ໄດ້ຕາມຄາດ ຈຶ່ງມີຄວາມຮູ້ສຶກຜິດ ຈົນລືມໄປວ່າແມ່ເປັນພຽງມະນຸດທຳມະດາທີ່ເມື່ອຍ ແລະ ຮ້ອງໄຫ້ໄດ້.

ຄວາມຮູ້ສຶກຜິດຂອງແມ່ມາຈາກຫຼາຍເຫດຜົນ ທັງລັກສະນະນິໄສສ່ວນຕົວຂອງແມ່; ຄວາມກົດດັນຈາກຄອບຄົວ, ໝູ່ເພື່ອນ ຫຼື ສື່ສັງຄົມອອນລາຍຕ່າງໆ ຍິ່ງເຫັນລູກຄົນອື່ນມີພັດທະນາການທີ່ດີກວ່າລູກຂອງຕົນ ຍິ່ງເປັນສິ່ງເສີມໃຫ້ຕັ້ງຄຳຖາມກັບຕົນວ່າ ເປັນແມ່ທີ່ບໍ່ດີພໍ ຫຼືບໍ່?

ເພື່ອຊອກຫາຄຳຕອບທີ່ເຮັດໃຫ້ເກີດຄວາມສົງໄສກ່ຽວກັບຄວາມເປັນແມ່ ລອງພິຈາລະນາຢ່າງເລິກເຊິ່ງ ເຖິງສາເຫດທີ່ແທ້ຈິງຂອງຄວາມຮູ້ສຶກຜິດ. ຕົວຢ່າງ: ພະຍາຍາມບໍ່ລ້ຽງລູກຄືກັບທີ່ພໍ່ແມ່ລ້ຽງບໍ່? ເນື່ອງຈາກວ່າບາງຄັ້ງ ການພະຍາຍາມຫຼາຍເກີນໄປ ສາມາດເຮັດໃຫ້ຮູ້ສຶກຜິດໄດ້ ຫຼື ມີອາການຊຶມເສົ້າ, ຂີ້ຫຼົງຂີ້ລືມ... ເມື່ອໄດ້ຮັບຄຳຕອບກໍລອງປະເຊີນໜ້າກັບຄວາມຈິງ ມັນອາດຈະຊ່ວຍບັນເທົາຄວາມຮູ້ສຶກຜິດລົງໄດ້.

ຕາມຄວາມເປັນຈິງ ຄຳແນະນຳຫຼືມາດຕະຖານໃດໜຶ່ງຂອງສັງຄົມ ເປັນພຽງຄູ່ມືແນະນຳທີ່ແຕ່ລະຄອບຄົວສາມາດປັບປ່ຽນໃຫ້ເຂົ້າກັບວິຖີຊີວິດຂອງຕົນ ສະນັ້ນ, ຕ້ອງຊອກຫາຈຸດທີ່ມີຄວາມສົມດຸນກັນ ຖ້າຮູ້ສຶກຢາກໃຫ້ເວລາກັບລູກນ້ອຍໃຫ້ຫຼາຍ ຕ້ອງຫາເວລາຫວ່າງໂດຍໃຫ້ລູກເປັນບູລິມະສິດທຳອິດ ຫຼືຖ້າຕ້ອງປະລູກໃຫ້ຄົນອື່ນລ້ຽງ ອາດຈະໂທຫາລູກເປັນປະຈຳຕາມເວລາ. ເພື່ອໃຫ້ເດັກນ້ອຍຮູ້ວ່າ ພວກເຮົາບໍ່ໄດ້ລະເລີຍ ເຮັດຫຼາຍເທົ່າທີ່ເຈົ້າສາມາດເຮັດໄດ້ ແລະ ຍອມຮັບຄວາມຈິງວ່າມັນເປັນໄປໄດ້ ອາດຈະຊ່ວຍໃຫ້ພວກເຮົາກາຍເປັນແມ່ທີ່ມີຄວາມສຸກຫຼາຍຂຶ້ນ.

ໃນຫົວໃຈຂອງຄົນເປັນແມ່ ທຸກຄົນລ້ວນແຕ່ຢາກເປັນແມ່ທີ່ດີທີ່ສຸດ ແຕ່ຕ້ອງບໍ່ລືມວ່າແມ່ທີ່ດີທີ່ສຸດນັ້ນ ບໍ່ມີຢູ່ຈິງ ແມ່ທຸກຄົນລ້ວນແຕ່ເຄີຍຜິດພາດ ການເປັນແມ່ຈຶ່ງບໍ່ແມ່ນພຽງແຕ່ພະຍາຍາມເປັນແມ່ທີ່ສົມບູນແບບ ແຕ່ຄວນເປັນແມ່ທີ່ຢູ່ໃນຊີວິດລູກ ຮຽນຮູ້ຄວາມຜິດພາດ ແລະ ເຕີບໃຫຍ່ໄປພ້ອມກັບລູກ ຮູ້ຈັກຍອມຮັບຄວາມບໍ່ສົມບູນ, ຫຼຸດຄວາມຄາດຫວັງ ແລະ ຢຸດປຽບທຽບໂຕເອງກັບຄົນອື່ນ ແລະ ໃຊ້ເວລາກັບລູກຢ່າງມີຄວາມສຸກ.



# ຂຽນຄໍາລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ຊັບໃນດິນ | ສັບໃນດິນ |
| ຊັບພະຍາກອນ | ສັບພະຍາກອນ |
| ຊັບສິນທາງປັນຍາ | ສັບສິນທາງປັນຍາ |
| ຊັບສົມບັດ | ສັບສົມບັດ |
| ຊັບໃສ່ຫູ | ສັບໃສ່ຫູ |
| ຊາບຊຶ້ງ | ສາບຊຶ້ງ |
| ຊຸບລ້ຽງ | ສຸບລ້ຽງ |
| ຊຸບຜັກ | ສຸບຜັກ |
| ເຊືອບຫຼັບ | ເສືອບຫຼັບ |




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

**ຄ) ພະຍາດຕັນຫາຊື່ສຽງ:**

ຖືວ່າໂຕເປັນຜູ້ດີ, ຜູ້ໃຫຍ່,ບາງທີຍ້ອນຄວາມຕັນຫາຊື່ສຽງນັ້ນສິ່ງທີ່ບໍ່ຄວນເຮັດກໍໄປເຮັດ ເມື່ອຖືກຕາໜິຕິຕຽນ ກໍມີແນວຄິດລັງເລ, ຄົນຊະນິດນັ້ນ ມີແຕ່ຮູ້ຂຶ້ນບໍ່ລົງ, ຫົນໄດ້ແຕ່ຄວາມສຸກ ບໍ່ຫົນຄວາມທຸກໄດ້, ມັກແຕ່ເປັນປະທານຄະນະນັ້ນ ກຳມະການນີ້ ແຕ່ບໍ່ມັກເຮັດວຽກຕົວຈິງ.

**ງ) ພະຍາດຂາດລະບຽບວິໄນ:**

ມີພະຍາດເອກະຊົນ ມີແນວຄິດ ແລະ ການກະທຳທີ່ຍົກຜົນປະໂຫຍດສ່ວນຕົວຂຶ້ນເທິງວຽກການທຸກຢ່າງ, ເພາະສະນັ້ນ ເມື່ອເຮັດວຽກຫຍັງກໍບໍ່ຖືເອົາພັກເປັນພື້ນຖານ, ໃຈຂອງໂຕເອງມັກແນວໃດ ກໍເຮັດແນວນັ້ນ ລືມລະບຽບວິໄນຂອງພັກໄປໝົດ, ເວລາຕຳໜິກັນ ກໍຕັ້ງໃຈຕິຕຽນແຕ່ຜູ້ອື່ນ ເວົ້າແຕ່ສິ່ງເຂົາເຈົ້າບໍ່ມັກ. ເວລາເລື່ອນຊັ້ນໃຫ້ຜູ້ໃດ ກໍມີແຕ່ຢາກອ້າງເປັນບຸນເປັນຄຸນ ລົ້ງເຄີຍຮັກແພງຜູ້ໃດ ກໍຢາກເອົາແຕ່ຜູ້ນັ້ນຂຶ້ນ.

**ຈ) ສະໝອງຄັບແຄບ:**

ຢູ່ໃນພັດບໍ່ຮູ້ຍົກຍໍຜູ້ທີ່ດີ ຢ້ານແຕ່ຄົນອື່ນຈະລື່ມໂຕ. ຢູ່ນອກພັກ ກໍດູຖູກຜູ້ອື່ນຖືວ່າຜູ້ໃດກໍບໍ່ເປັນນັກປະຕິວັດທໍ່ໂຕ ບໍ່ສະຫຼາດສະຫຼຽວຄືໂຕ, ຍ້ອນແນວນັ້ນ ຈຶ່ງບໍ່ຮູ້ຕິດຕໍ່ຮ່ວມມືກັບຄົນຜູ້ທີ່ມີຄຸນສົມບັດ ແລະ ມີຄວາມສາມາດຢູ່ນອກພັກ, ເປັນແນວນັ້ນ ຜູ້ອື່ນຈຶ່ງກຽດຊັງ ແລະ ໂຕເອງຖືກແຍກອອກໂດດດ່ຽວ.

ອ່ານຕໍ່ສະບັບໜ້າ...



## ສຸກສະບາຍຫາຍໂຣຄາ

# ອັນຕະລາຍຈາກພລາສະຕິກອ່ອນ

# ສາວແວ່ນ



ໃນຖົງຢາງພລາສະຕິກອ່ອນທຸກຊະນິດທີ່ໃຊ້ຫໍ່ຫຸ້ມອາຫານ, ບັດເອທີເອັມ, ຜ້າມ່ານໃນຫ້ອງນ້ຳ ແລະ ອື່ນໆ ມີສານເຄມີທີ່ເອີ້ນວ່າ: ພາທາເລດ (phthalate) ທີ່ຊ່ວຍເພີ່ມຄວາມອ່ອນຂອງວັດຖຸ ເຊິ່ງຖ້າໄດ້ຮັບສານນີ້ເຂົ້າໄປຫຼາຍ ຈະເຮັດໃຫ້ມີຄວາມສ່ຽງຕໍ່ຄວາມດັນເລືອດສູງ ໂດຍໄດ້ຮັບການຢືນຢັນການຄົ້ນຄວ້າຈາກສະຖາບັນ Pediatrics ທີ່ໄດ້ເກັບຜົນການທົດສອບໃນກຸ່ມຕົວຢ່າງ ຈາກເດັກນ້ອຍອາຍຸ 6-19 ປີ ແລະ ພົບວ່າ ເດັກນ້ອຍທີ່ໄດ້ຮັບສານເຄມີພາທາເລດ ຈະມີຄວາມດັນເລືອດສູງກວ່າເດັກນ້ອຍທີ່ບໍ່ໄດ້ຮັບສານເຄມີນີ້.

ຟັງເບິ່ງຄືວ່າບໍ່ອັນຕະລາຍຫຼາຍ ແຕ່ຕົວຈິງແລ້ວ ມັນເປັນອັນຕະລາຍໃນໄລຍະຍາວ ສານເຄມີນີ້ ເຮັດໃຫ້ຮ່າງກາຍເກີດພາວະຄວາມຕຶງຄຽດອັອກຊີເດຊັ່ນ (oxidative stress) ນັ້ນກໍຄືການທີ່ຈຸລັງຖືກສານອະນຸມູນອິດສະຫຼະທຳລາຍ ມັນເປັນສາເຫດແຫ່ງພະຍາດຄວາມເສື່ອມຊຳເຮື້ອຫຼາຍກວ່າ 70 ຊະນິດ ເຊິ່ງລ້ວນເປັນພື້ນຖານຂອງການເກີດພະຍາດເສັ້ນເລືອດຫົວໃຈ, ມະເຮັງ, ເສັ້ນເລືອດຕີບ, ຄໍ່ອັກເສບ ແລະ ການແຂງຕົວຂອງເນື້ອເຍື່ອແດງ ພະຍາດຄວາມຈຳເສື່ອມ ແລະ ການເສື່ອມສະພາບສະເພາະ.

ນອກນັ້ນ, ພາທາເລດທີ່ຢູ່ໃນພລາສະຕິກຫໍ່ອາຫານ ຍັງຂັດຂວາງການເຮັດວຽກຂອງຕ່ອມຕ່າງໆໃນຮ່າງກາຍ ໂດຍສະເພາະຜູ້ທີ່ມີບັນຫາໂມເລກຸນຕ່ຳໃນເລືອດຢູ່ແລ້ວ ເຊິ່ງຈະພາໃຫ້ເກີດຄວາມຜິດປົກກະຕິຂອງຮໍໂມນ ແລະ ເພີ່ມການເຕີບໂຕຂອງເດັກຍິງ ເຮັດໃຫ້ເຕີບໃຫຍ່ເກີນອາຍຸ ແລະ ຍັງມີສ່ວນເຮັດໃຫ້ເກີດພະຍາດເບົາຫວານ, ສະມາທິສັ້ນ, ພູມແພ້ ແລະ ຫອບຫືດ.

ດັ່ງນັ້ນ, ຖ້າສາມາດຫຼີກເວັ້ນຈາກສານເຄມີນີ້ ຈະເປັນການດີທີ່ສຸດ ໂດຍຫຼີກລ່ຽງການກິນອາຫານສຳເລັດຮູບ ຫຼື ອາຫານທີ່ບັນຈຸ ຫຼື ຫໍ່ຫຸ້ມດ້ວຍພລາສະຕິກ ແລະ ສຳຄັນທີ່ສຸດ ບໍ່ຄວນຫໍ່ອາຫານທີ່ຫໍ່ພລາສະຕິກແລ້ວນຳເຂົ້າໃນໄມໂຄຣເວັບ ຄວນຫັນມາເກັບຮັກສາອາຫານໃສ່ໃນໂຖແກ້ວຈະດີກວ່າ. ເສຍສະຫຼະຄວາມສະດວກສະບາຍເລັກນ້ອຍ ເພື່ອປ້ອງກັນພະຍາດ ແລະ ເພື່ອສຸຂະພາບທີ່ດີ.

**ຂໍ້ມູນຈາກ: www.sanook.com**

## ອາດ ກະວີລາວ

# ເພີ່ມຂຶ້ນ

**# ສາວຄູ ວັງຄຳກລິ່ນ**

✻ ອັນວ່າ ສາຍຫາລາຍັ່ງຂຶ້ນ
ພະຍຸມາຍັງມີຫາຍ
ຝົນຕົກຍັງມີເອື້ອນ
ບາດວ່າຂອງເຄື່ອງໃຊ້

ຍັງມີໂຍບຍາມລົງ
ຊົ່ວພິບຕາໄດ້
ມືດມົວມີສະຫວ່າງ
ລາຄາຂຶ້ນບໍ່ລົງ ໜ່າຍເດ

✻ ວິກິດການ ແບບນີ້
ຫຼາຍຄົນ ທົນຈົມທຸກ
ເອົາເຫື່ອແຮງຫາຈ້າງ
ເຂົ້າກິນທັງເຄື່ອງໃຊ້

ແສນລຳບາກປວງຊົນ
ຫອດຫິວແລງເຊົ້າ
ແລກເງິນມາຈັບຈ່າຍ
ແພງຂຶ້ນຊູ່ອັນ ແທ້ນໍ

✻ ບາງພ່ອງ ລາຍຮັບນັ້ນ
ສິ້ນເດືອນເໝືອນໂຕປາ
ອຸກອັ່ງນຳເງິນເຟີ້
ຄ່ານ້ຳ-ໄຟເພີ່ມຊູ່ມື້

ມີແຕ່ເງິນເດືອນ
ຢູ່ວັງບໍ່ມີນ້ຳ
ອາຫານການກິນຢູ່
ກົດດັນທໍ້ທົດຖອຍ ແທ້ເດ

✻ ທຸກວັນຄອຍຄິດຄົ້ນ
ຊອກສັນຫາລາຍຮັບ
ລ້ຽງໄກ່ ເປັດ ປູກຝັງພ້ອມ
ບໍ່ແລ່ນນຳ ວັດຖຸຂອງເຄື່ອງໃຊ້

ຫາປ່ອງທາງໄປ
ຊ່ວຍຊູຊີວັງໄວ້
ພໍຢາກິນເຊົ້າຄ່ຳ
ມາເອ້ອວດຕົນ

✻ ແຖມອິດທົນຊອກເພີ້ມ
ຊອກແຫຼ່ງລາຍຮັບເສີມ
ເອົາສະໝອງສອງມືພ້ອມ
ໃຈໝັ້ນໝຽວແນ່ແທ້

ດຸໝັ່ນຂະຫຍັນພຽນ
ບໍ່ມົວອິນເອົ້າ
ໂຮມກັນເດັດດ່ຽວ
ຈຶ່ງຊູຊວ້ານຊ່ວຍຕົນ ໄດ້ນາ

✻ ການປະຢັດກໍເພີ່ມຂຶ້ນ
ລວມທັງການເຮຮາ
ອົດອອມການກິນ-ໃຊ້
ບໍ່ກ່ຽວ ອະບາຍຍະມຸກລໍ້

ຫຼາຍກວ່າຄາວຫຼັງ ແລ້ວໃດ
ດື່ມສຸລາຢຸດພ້ອມ
ໄປມາຫຼຸດທ່ຽວ
ຂໍພຽງພົ້ນຜ່ານວັນໆ ທ່ານເອີຍ



## ສັກສາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

✻ ***ວັນ***ທີ 1 ກັນຍາເປັນມື້ໄຂສົກຮຽນໃໝ່ທົ່ວປະເທດ ເປັນເທດການຄຶກຄື້ນ ສົກຮຽນໃໝ່ໄຂພິທີເຕັມທີຍາມໄປ-ມາ ລົດຕິດຄາຄ້າງ ບໍ່າຄະໜົບຈົບບໍ່ມີບ່ອນອ້າງ ທາງຄົນລົດໄຕ່ ແຫຍ້ກັບໄປຈົ່ງແໜ້ນ ຊາມຊາຮອດບ່ອນໝາຍ ລຽນເປັນແຖວຊ້າຍລ້າຍ ເກົ່າໃໝ່ຄົບງາມ ທາງສາມເລນຕັບເຕັມ ຄ່ອຍເຄື່ອນເໜັງທະຍັບຍ້າຍ ສ່ອນລົດຈັກກະເລີຍໄດ້ ປີນໄປຕາມທາງຍ່າງ ເພາະທາງຫຼວງບໍ່ຄ່ອຍອ້າງ ພໍໃຫ້ໄຕ່ເດີນໜ່າຍເດ ***ລົດຈັກຈົ່ມ!***

✻ ***ເດືອນ***ເກົ້າ ***ບຸນຫໍ່ເຂົ້າປະດັບດິນ*** ເປັນມື້ວັນສິບດັບ***ທະຍັບຈົ່ມເຂົ້າມາ*** ປະເພນີສືບສ້າງ ຊາວພຸດກະກຽມ ຕຽມອາຫານຄາວຫວານ ຫໍ່ໝົກຄວາຍໃຫ້ຝາກສົ່ງໄປຍັງເບື້ອງ ດວງວິນຍານຍາດມິດ ສຳພະເວສີພ່າພ້ອມ ຄົນລາວຮູ້ທົ່ວເຖິງ ***ບັ້ນແລ້ວ!***

## ຊອບຍິ້ມ

*# ແອ່ນຕຸ້ງ*

### ບັດໃໝ່

ມື້ເປີດສົກຮຽນໃໝ່ ຫຼັງຈາກນັກສຶກສາເຂົ້າຫ້ອງ ແລະ ອາຈານກໍໄດ້ສຳພາດເກືອບໝົດທຸກຄົນ, ສາວ ກູດ້ງອງ ຈຶ່ງໄປຮອດ; ລາວນຸ່ງສິ້ນເລີນໆເກືອບກາຍຫົວເຂົ່າ ແລະ ນຸ່ງເສື້ອຮັດໆຈົນໃຜແນມເບິ່ງ ກໍຮູ້ສຶກອຶດອັດຕາງ, ລາວຍ່າງເຂົ້າໄປໃນຫ້ອງ ນັ່ງໂຕະໜ້າຊາໄຂວ່ຫ້າງ ພ້ອມທັງປ່ອຍຮອຍຍິ້ມໃສ່ອາຈານດ້ວຍສາຍຕາລັກໄກ່, ພໍແຕ່ອາຈານສັງເກດເບິ່ງບຶດໜຶ່ງຈຶ່ງຖາມຂຶ້ນວ່າ:

**ອາຈານ:** ຈະໃຫ້ອາຈານສຳພາດດຽວນີ້ ຫຼືຊິໃຫ້ອາຈານນັດພົບຕ່າງຫາກ;

**ສາວ ກູດ້ງອງ** ແນມເບິ່ງອາຈານທັງຍິ້ມ ແລະ ຕອບວ່າ ນັດກະໄດ້.

**ອາຈານ:** ຄັນຊັ້ນອາຈານນັດພົບປີໜ້າເດີ ປີນີ້ບໍ່ຕ້ອງຮຽນດອກ!

**ສາວກູດ້ງອງ:** !!! ???







## ຄະຕິເຕືອນໃຈ

*# ດອກຫຍ້າ*

ຢ່າຊູຫລັງສຸກຍ້ອນ ບຸນເອົາມາເພິ່ງ
ສຸກກໍ່ສຸກເພີ່ນພຸ້ນ ບໍ່ມີກຸ້ມຮອດເຮົາ ດອກນາ!




# ເຫຍື່ອ - ເຫຍື້ອ

ຜ່ານມາ ໃນການໃຊ້ຄຳທີ່ມີຄວາມໝາຍວ່າ "ເສດສິ່ງຂອງ" ມີການສະກົດເປັນສອງແບບ ຄື "ຂີ້ເຫຍື່ອ" ແລະ "ຂີ້ເຫຍື້ອ". ສາເຫດທີ່ພາໃຫ້ເກີດມີການສະກົດຕ່າງເປັນໄມ້ເອກ ່ ແລະ ໄມ້ໂທ ້ ກໍຍ້ອນຂຽນຕາມສຽງທີ່ຕົນຜັນ ເຊິ່ງຜັນຜິດພ້ຽນຈາກສຽງເດີມ.

ເພື່ອເຮັດໃຫ້ເຂົ້າໃຈ ແລະ ຮູ້ເຖິງຄວາມຖືກຕ້ອງຂອງການສະກົດຄຳທີ່ມີຄວາມໝາຍວ່າ "ເສດສິ່ງຂອງ", ເຮົາມາເບິ່ງການສະກົດຄຳ ແລະ ການໃຫ້ຄວາມໝາຍຂອງຄຳວ່າ "ເຫຍື່ອ" ແລະ "ເຫຍື້ອ" ວ່າຄືກັນຫຼືຕ່າງກັນແນວໃດ.

ຄຳທີ່ສະກົດເປັນ "ເຫຍື່ອ" ແລະ "ເຫຍື້ອ" ປາກົດຢູ່ໃນວັດຈະນານຸກົມລາວ ສະບັບມະຫາສິລາ ວີລະວົງ ປີ 1960 ໂດຍໃຫ້ຄຳນິຍາມຂອງຄຳວ່າ "ເຫຍື່ອ" ເປັນຄຳນາມ ໝາຍເຖິງ "ອາຫານ, ຂອງກິນ, ຂອງລໍ້ໃຫ້ສັດກິນ"; ສ່ວນ "ເຫຍື້ອ" ເປັນຄຳນາມ ໝາຍເຖິງ "ເສດສິ່ງຂອງ, ເສດຕອກ ແລະ ໄມ້ທີ່ຢູ່ຕາມເດີ່ນບ້ານ".

ໃນວັດຈະນານຸກົມພາສາລາວ ສະບັບ ດຣ. ທອງຄຳ ອ່ອນມະນີສອນ ສະບັບປັບປຸງ ປີ 2008 ໄດ້ໃຫ້ຄຳນິຍາມສອງຄຳນີ້ຄືກັນກັບສະບັບຂອງມະຫາສິລາ ວີລະວົງ, ຕ່າງແຕ່ການເພີ່ມຄຳເວົ້າຢູ່ໃນທ້າຍຄຳນິຍາມຂອງ "ເຫຍື້ອ" ວ່າ "ຂີ້ເຫຍື້ອກວ່າ".

ຈາກຄຳນິຍາມຂອງວັດຈະນານຸກົມພາສາລາວສອງສະບັບຂ້າງເທິງນີ້ ກໍສະແດງໃຫ້ເຫັນວ່າ ຜູ້ໃດສະກົດຄຳທີ່ມີຄວາມໝາຍວ່າ "ເສດສິ່ງຂອງ" ເປັນ "ຂີ້ເຫຍື່ອ" ຖືວ່າຜິດ. ດັ່ງນັ້ນ, ຄຳທີ່ຖືກຕ້ອງແມ່ນ "ຂີ້ເຫຍື້ອ".

ດ້ວຍເຫດນັ້ນ ເວລາໃຊ້ຄຳວ່າ "ເຫຍື່ອ" ແລະ "ເຫຍື້ອ", ພວກເຮົາຕ້ອງຈື່ໃຫ້ໄດ້ວ່າ: "ເຫຍື່ອ" ໝາຍເຖິງ "ຂອງກິນ, ຂອງລໍ້ໃຫ້ສັດກິນ" ພ້ອມກັນນັ້ນ ກໍຍັງໝາຍເຖິງ "ຜັກ ແລະ ໝາກປີທີ່ຊອຍປົນໃສ່ເຂົ້າປຸ້ນ" ເຊັ່ນ

- ກວາງເປັນເຫຍື່ອອັນແຊບຊ້ອຍຂອງເສືອ.
- ບຸນຍູ້ເອົາຂີ້ກະເດືອນມາເປັນເຫຍື່ອໃນການຕຶກເບັດ.
- ເວລາກິນເຂົ້າປຸ້ນ ຂ້ອຍມັກໃສ່ເຫຍື່ອໜ້ອຍໜຶ່ງ.

"ເຫຍື້ອ" ໝາຍເຖິງ "ເສດສິ່ງຂອງ, ສິ່ງເສດເຫຼືອທີ່ເອົາຖິ້ມແລ້ວ", ເວລາເວົ້າມັກຕື່ມຄຳວ່າ "ຂີ້" ໃສ່ເປັນ "ຂີ້ເຫຍື້ອ" ເຊັ່ນ

- ຢູ່ບ່ອນນີ້ ຫ້າມຖິ້ມຂີ້ເຫຍື້ອ.
- ຢ່າຖິ້ມຂີ້ເຫຍື້ອທົ່ວທີບເດີ!
- ກວາດຂີ້ເຫຍື້ອຢູ່ເດີ່ນບ້ານອອກໃຫ້ກ້ຽງເດີ!




# ຈີນຈະເບີກເງິນທຶນ 10 ຕື້ໂດລາ ເພື່ອຈັດຕັ້ງປະຕິບັດຂໍ້ລິເລີ່ມການພັດທະນາທົ່ວໂລກ



ຕາມລາຍງານຂ່າວເມື່ອວັນທີ 28 ສິງຫາຜ່ານມາ, ໃນໄລຍະການສົນທະນາລະຫວ່າງປະເທດບຣິກສ໌ກັບປະເທດອາຟຣິກາ ຕະຫຼາດຈະເລີນໃໝ່ອື່ນໆ ແລະ ປະເທດພວມພັດທະນາ, ຈີນໄດ້ປະກາດວ່າ: ຈີນໄດ້ຕັ້ງກອງທຶນພັດທະນາທົ່ວໂລກ ແລະ ການຮ່ວມມືມູນຄ່າ 4 ຕື້ໂດລາ, ອີງການການເງິນຈີນຈະເບີກເງິນທຶນ 10 ຕື້ໂດລາ ເພື່ອໃຊ້ເຂົ້າໃນການຈັດຕັ້ງປະຕິບັດຂໍ້ລິເລີ່ມການພັດທະນາທົ່ວໂລກ.

ທ່ານ ນາງ ທ່າງຢີ້ງ ຫົວໜ້າສູນພັດທະນາ ແລະ ຊຸກຍູ້ທົ່ວໂລກຂອງອົງການຮ່ວມມືພັດທະນາສາກົນແຫ່ງຊາດ ຈີນ ໄດ້ກ່າວວ່າ: ການທີ່ຈີນປະກາດວ່າ "ອົງການການເງິນຈີນ ຈະເບີກເງິນທຶນ 10 ຕື້ໂດລາ ເພື່ອໃຊ້ເຂົ້າໃນການຈັດຕັ້ງປະຕິບັດຂໍ້ລິເລີ່ມການພັດທະນາທົ່ວໂລກ" ເທື່ອນີ້ ຈະສ້າງພະລັງແຮງໃໝ່ໃຫ້ແກ່ພາລະກິດການພັດທະນາທົ່ວໂລກ.

# ລັດຖະສະພາອາຟຣິກາໃຕ້ ຕີລາຄາສູງຜົນໄດ້ຮັບຈາກການພົບປະຂອງຜູ້ນຳປະເທດບຣິກສ໌

ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ວັນທີ 26 ສິງຫານີ້, ລັດຖະສະພາອາຟຣິກາໃຕ້ໄດ້ອອກຖະແຫຼງການ ຕີລາຄາສູງ ຕໍ່ຜົນໄດ້ຮັບຈາກການພົບປະຄັ້ງທີ 15 ຂອງຜູ້ນຳປະເທດບຣິກສ໌ (BRICS).



ເນື້ອໃນຖະແຫຼງການລະບຸວ່າ: ຜົນໄດ້ຮັບຈາກການພົບປະທີ່ມີ "ລັກສະນະປະຫວັດສາດ" ເທື່ອນີ້ ໄດ້ຢືນຢັນໃຫ້ເຫັນເຖິງຄວາມສາມາດດ້ານການນຳພາທີ່ເບິ່ງກວ້າງມອງໄກ ແລະ ຄຳໝັ້ນສັນຍາທີ່ໝັ້ນໜຽວບໍ່ປ່ຽນແປງຂອງຜູ້ນຳປະເທດ BRICS, ສະແດງໃຫ້ເຫັນເຖິງນ້ຳໃຈການຮ່ວມມືສາກົນທີ່ແຂງແຮງ, ໄດ້ກ່າວເນັ້ນເຖິງລັດທິຫຼາຍຝ່າຍ, ການແກ້ໄຂການປະທະກັນໂດຍສັນຕິ ແລະ ການສະແຫວງຫາການພັດທະນາແບບຍືນຍົງ. ການພົບປະໄດ້ສຸມໃສ່ແກ້ໄຂບັນຫາຄວາມບໍ່ສະເໝີພາບດ້ານເສດຖະກິດ, ຊຸກຍູ້ການເຕີບໂຕ ແລະ ຄົ້ນຫາການປະດິດສ້າງແຜນການແກ້ໄຂບັນຫາດ້ານການເງິນໃໝ່, ສິ່ງນີ້ ບໍ່ພຽງແຕ່ຈະເພີ່ມກຳລັງແຮງຂອງປະເທດ BRICS ເທົ່ານັ້ນ, ຍັງຈະກາຍເປັນແຮງຂັບເຄື່ອນທີ່ເຮັດໃຫ້ອາຟຣິກາ ລວມເຖິງທົ່ວໂລກມີຄວາມກ້າວໜ້າ ແລະ ສະຖຽນລະພາບ.

ເນື້ອໃນຖະແຫຼງການ ຍັງໄດ້ຍ້ອງຍໍຂໍ້ຕົກລົງລວມໝູ່ກ່ຽວກັບ BRICS ຂະຫຍາຍສະມາຊິກ ໂດຍກ່າວວ່າ: ການຂະຫຍາຍສະມາຊິກເທື່ອນີ້ ຈະສ້າງຜົນສະທ້ອນໄປທົ່ວໂລກ ໂດຍສະເພາະແມ່ນມີຜົນດີຕໍ່ປະເທດທີ່ພວມພັດທະນາ, ຕະຫຼາດຈະເລີນໃໝ່ ແລະ ການຊຸກຍູ້ໃຫ້ມີຫຼາຍຂົ້ວ, ແມ່ນບາດກ້າວຍຸດທະສາດທີ່ຊຸກຍູ້ການຮ່ວມມື ແລະ ການພັດທະນາ ພ້ອມທັງການປະດິດສ້າງ ແລະ ເພີ່ມທະວີການພົວພັນດ້ານເສດຖະກິດ. ປະເທດໃໝ່ຕ່າງໆທີ່ເຂົ້າເປັນສະມາຊິກ ຈະສ້າງໂອກາດໃໝ່ເພື່ອນຳໃຊ້ກຳລັງແຮງສັງລວມຫຼຸດຜ່ອນຄວາມຫຼຸດໂຕນກັນດ້ານເສດຖະກິດ, ຊຸກຍູ້ການເຕີບໂຕແບບຍືນຍົງ ແລະ ເພີ່ມທະວີສຽງຂອງປະເທດທີ່ພວມພັດທະນາໃນເວທີສາກົນ.




# ກົດໝາຍວ່າດ້ວຍການບໍລິການເຕັກນິກດິຈິຕອນ EU ມີຜົນສັກສິດຢ່າງເປັນທາງການ

ເມື່ອບໍ່ດົນມານີ້, ກົດໝາຍວ່າດ້ວຍການບໍລິການເຕັກນິກດິຈິຕອນ (DSA) ຂອງສະຫະພາບເອີຣົບ (EU)-ກົດໝາຍພາກບັງຄັບໃຫ້ບັນດາບໍລິສັດເຕັກໂນໂລຊີໃຫຍ່ ຕ້ອງຮັບປະກັນຄວາມປອດໄພໃຫ້ແກ່ຜູ້ນຳໃຊ້ໄດ້ມີຜົນສັກສິດຢ່າງເປັນທາງການ.



ປັດຈຸບັນ, ເມຕາ (Meta), ສເນັບແຊັດ (Snapchat) ແລະ ຕິກຕ໋ອກ (TikTok) ໄດ້ຜັນຂະຫຍາຍບັນດາການປ່ຽນແປງໃຫ້ສອດຄ່ອງກັບກົດໝາຍໃໝ່ຂອງ EU. ໄລຍະທຳອິດຂອງກົດໝາຍ ວ່າດ້ວຍການບໍລິການເຕັກນິກດິຈິຕອນຂອງ EU ທີ່ເລີ່ມແຕ່ວັນທີ 25 ສິງຫາຜ່ານມາ ໄດ້ມີຜົນບັງຄັບໃຊ້ສຳລັບ 19 ພື້ນຖານບໍລິສັດເຕັກໂນໂລຊີໃຫຍ່ຜູ້ໃຫ້ບໍລິການດ້ານດິຈິຕອນ; ບັນດາພື້ນຖານທີ່ຍັງເຫຼືອແມ່ນຈະປະຕິບັດກົດໝາຍສະບັບດັ່ງກ່າວແຕ່ເດືອນກຸມພາ 2024. ຖ້າຫາກວ່າບໍລິສັດໃດລະເມີດກົດໝາຍສະບັບໃໝ່ນີ້, EU ຈະປັບໃໝ 6% ຂອງລາຍຮັບຈາກທົ່ວໂລກ ຫຼື ຈະຖືກຫ້າມເຄື່ອນໄຫວຢູ່ EU.

# ການສໍ້ລາດບັງຫຼວງ ໃນຮູບການຕ່າງໆ ແລະ ວິທີແກ້ໄຂ

❖ ວິເສດ ສະແຫວງສຶກສາ

ຄວາມອັນຕະລາຍຂອງພະຍາດສໍ້ລາດບັງຫຼວງນັ້ນ ມີບາງຄົນປຽບໃສ່ກຸ່ມພະຍາດແມ່ກາຝາກ ເຊັ່ນ ເຫຼົ່າແມ່ທ້ອງທັງຫຼາຍຫັ້ນລະ, ມີບາງຄົນປຽບທຽບຊັດແຈ້ງກວ່ານັ້ນວ່າ ເປັນຄືທໍ່ນໍ້າໃຫຍ່ເພື່ອເປັ່ງນໍ້າເຂົ້ານາ ແຕ່ທໍ່ທີ່ວ່ານັ້ນພັດເປັນຮູກະບ່ອງກະແບ່ງ ນໍ້າຮົ່ວໄປສຸດທໍ່, ສຸດທ້າຍນໍ້າກໍ່ບໍ່ໄປຮອດໄຮ່ນາ ຫຼື ຮອດກໍ່ຮອດໜ້ອຍ. ເລື່ອງສໍ້ລາດບັງຫຼວງນີ້ ຄົນສ່ວນໃຫຍ່ຄິດເຖິງແຕ່ເລື່ອງເມັດເງິນ ຫຼື ວັດຖຸທີ່ເສຍໄປຍ້ອນບັນຫາຫຍໍ້ທໍ້ນີ້ ແຕ່ສິ່ງທີ່ຫຼາຍຄົນຄົ້ນຫາບໍ່ຄ່ອຍຈະແນມເຫັນ ນັ້ນກໍຄືເວລາ, ເຊັ່ນ ການເຮັດໃຫ້ເສຍເວລາໃນການເຮັດວຽກ, ໃນການພັດທະນາປະເທດຊາດ, ການມາການຊ້າ-ເລີກໄວ ເຫຼົ່ານີ້ກໍແມ່ນຮູບການສໍ້ລາດບັງຫຼວງທີ່ອັນຕະລາຍເຊັ່ນກັນ. "ເວລາແມ່ນເງິນ!" ນີ້ຄືຄະຕິທີ່ວ່າວອນສອນໄວ້.

ສໍາລັບບົດນີ້ ຜູ້ຂຽນໄດ້ກັ່ນເອົາບາງເລື່ອງກ່ຽວກັບອັດຕາຂອງພະຍາດສໍ້ລາດບັງຫຼວງທີ່ເກີດຂຶ້ນຢູ່ບາງປະເທດ ພ້ອມດ້ວຍວິທີແກ້ໄຂ. ພະຍາດສໍ້ລາດບັງຫຼວງນີ້ ມັນສາມາດໂປໂລຫົວຂຶ້ນໄດ້ຢູ່ທຸກໆບ່ອນ, ທຸກສະຖານະການທີ່ຂາດຄວາມໂປ່ງໃສ, ບ່ອນທີ່ຂອດການປະຕິບັດກົດໝາຍຍັງອ່ອນແອ.

ຂໍເລີ່ມກ່ຽວກັບການສໍ້ລາດບັງຫຼວງໃນມະຫາກໍາກິລາໂອລິມປິກ ທີ່ກໍານົດໃສ່ປີ 2020 ຢູ່ໂຕກຽວ, **ຍີ່ປຸ່ນ** ແຕ່ຍ້າຍມາຈັດໃນປີ 2021 ຍ້ອນພະຍາດໂຄວິດ-19 ລະບາດ ເຊິ່ງກໍມີເລື່ອງຊ່າລືກັນກ່ຽວກັບການສໍ້ລາດບັງຫຼວງທີ່ສອດຫ້ອຍເປັນພວງພະນັງ ເຖິງຂັ້ນມີການຈັບກຸມກັນ. ຂ່າວບອກວ່າ ທ່ານ ຊຸຊຸຣິໂກະ ກາໂດະກາວະ ອາຍຸ 79 ປີ, ປະທານບໍລິສັດ ກາໂດະກາວະ ໄດ້ມີຄວາມຜິດຖານໃຫ້ເງິນສິນບົນຈໍານວນ 69 ລ້ານເຢັນແກ່ທ່ານ ຮາຣຸຍູກິ ກໍາມະການຄະນະກະກຽມງານ ມະຫະກໍາກິລາ ໂອລິມປິກ ນັ້ນເອງ, ເພິ່ນຜູ້ນີ້ເປັນນັກທຸລະກິດໃຫຍ່ດ້ານກິລາ. ຂ່າວບໍ່ໄດ້ບອກລະອຽດວ່າເງິນສິນບົນນັ້ນມີຈຸດປະສົງເພື່ອຫຍັງ ແຕ່ກໍພໍອ່ານອອກວ່າມັນກໍກ່ຽວກັບຜົນປະໂຫຍດຈາກການໃຫ້ບໍລິການດ້ານຕ່າງໆສໍາລັບງານມະຫະກໍາກິລາຄັ້ງນີ້, ເພາະຜູ້ໃຫ້ສິນບົນມີຖານະເປັນຫົວໜ້າບໍລິສັດ, ສ່ວນຜູ້ຮັບສິນບົນ ກໍເປັນນັກທຸລະກິດໃຫຍ່ດ້ານກິລາ. ຄະດີໃຫ້ ແລະຮັບສິນບົນນີ້ ຍັງໄດ້ລາມໄປຮອດທ່ານປະທານຜູ້ກໍ່ຕັ້ງບໍລິສັດຂາຍຍ່ອຍ ອາໂອກິໂຮນດິງ ອີກດ້ວຍ. ທັງສາມຄົນຖືກເຈົ້າໜ້າທີ່ຈັບກຸມຕາມຄວາມຜິດທີ່ໄດ້ກໍ່ຂຶ້ນ. ບໍ່ພຽງແຕ່ມະຫະກໍາໂອລິມປິກຄັ້ງຜ່ານມາທີ່ໄດ້ຮັບຜົນກະທົບຈາກພະຍາດສໍ້ລາດບັງຫຼວງ, ແຕ່ສະຫະພັນບານເຕະສາກົນ (ຟີຟາ FIFA) ກໍປະເຊີນເຊັ່ນດຽວກັນ. ບັນຫາສໍ້ລາດບັງຫຼວງ ໃນວົງການບານເຕະໂລກນີ້ ພົວພັນກັບການຄ້າມະນຸດ, ຢາເສບຕິດ, ການນໍາໃຊ້ສານກະຕຸ້ນ, ການຊື້ຈ້າງຈອບອອຍໃນກຸ່ມນັກກິລາຜູ້ຕັດສິນ ແລະ ອື່ນໆ ໂດຍຜູ້ທີ່ຕົກເປັນເຫຍື່ອນັ້ນສ່ວນໃຫຍ່ແມ່ນຊາວໜຸ່ມ. ດັ່ງນັ້ນ ເພື່ອແກ້ໄຂບັນຫານີ້ໃຫ້ຫຼຸດໜ້ອຍຖອຍລົງແລະໝົດໄປໃນທີ່ສຸດ, ທາງອົງການ ຟີຟາ ແລະ ໜ່ວຍງານຕ້ານຢາເສບຕິດ ແລະ ອາຊະຍາກໍາຂອງອົງການສະຫະປະຊາຊາດ ຈຶ່ງໄດ້ຮ່ວມກັນເຊັນບົດບັນທຶກຄວາມເຂົ້າໃຈ ໃນຕົ້ນເດືອນກັນຍາ 2020 ໂດຍມີຈຸດປະສົງຮ່ວມມືກັນຕ້ານໄພສໍ້ລາດບັງຫຼວງ ແລະ ອາຊະຍາກໍາໃນວົງການກິລາ. ບົດບັນທຶກໄດ້ເນັ້ນ 2 ວຽກທີ່ເປັນບຸລິມະສິດຄື: 1 ແກ້ໄຂບັນຫາທຸດຈະລິດ ແລະ ອາຊະຍາກໍາ ທີ່ມັກເກີດຂຶ້ນໃນກິດຈະກໍາຕ່າງໆຂອງວົງການກິລາບານເຕະ ແລະ 2 ເພື່ອຊ່ວຍແນະນໍາຊາວໜຸ່ມ-ເຍົາວະຊົນ ມີທັກສະໃນຊີວິດ, ໃຫ້ມີພູມຕ້ານທານບໍ່ໃຫ້ຕົກເປັນເຫຍື່ອຂອງກຸ່ມຄົນບໍ່ດີ ທີ່ອາໄສວົງການກິລາບານເຕະ, ຊອກຫາຜົນປະໂຫຍດຢ່າງຜິດກົດໝາຍ. ສ່ວນທີ່ **ມາເລເຊຍ** ນັ້ນ ກໍ່ມີຂ່າວວ່າ, ຄະນະກໍາມະການຕ້ານການສໍ້ລາດບັງຫຼວງ ປະຈໍາລັດຊາບາ ໄດ້ຈັດກອງປະຊຸມສໍາມະນາຂຶ້ນ ເພື່ອຊອກຊ່ອງທາງແກ້ໄຂຕ່ອງໂສ້ການຄ້າສັດປ່າທີ່ຕິດພັນກັບໄພສໍ້ລາດບັງຫຼວງ . ຊາບາ ເປັນລັດທີ່ມີການຄ້າຂາຍສັດປ່າ ແບບຜິດກົດໝາຍຫຼາຍທີ່ສຸດ. ຜົນສະຫຼຸບຂອງກອງປະຊຸມເວົ້າວ່າ. ການຄ້າສັດປ່າແບບຜິດກົດໝາຍນັ້ນ ຕິດພັນກັບການໃຫ້ສິນບົນ ເພື່ອໃຫ້ໄດ້ຂໍ້ມູນກ່ຽວກັບການເຄື່ອນຍ້າຍສັດປ່າ, ຂໍ້ມູນກ່ຽວກັບການປ້ອງກັນຕິດຕາມສັດປ່າ, ການໃຫ້ສິດ, ການ ໃຫ້ໂຄຕາສັດປ່າຕາມຄວາມຕ້ອງການ, ການຊື້ຈ້າງເຈົ້າໜ້າທີ່ ເພື່ອຄວາມສະດວກໃນການເຄື່ອນຍ້າຍສັດປ່າ. ວິທີແກ້ໄຂ ກໍຄືພະນັກງານປ່າໄມ້, ພະນັກງານຄຸ້ມຄອງສັດປ່າ ແລະ ການປະມົງ ຕ້ອງໄດ້ຮັບການຝຶກອົບຮົມທາງວິຊາການຄັກແນ່ ມີເຄື່ອງມືພຽງພໍເພື່ອປາບປາມການສໍ້ລາດບັງຫຼວງໃນຮູບອາຊະຍາກໍາຄ້າສັດປ່າທີ່ຫວງຫ້າມ.




## ມັນບໍ່ແປກດອກ

*#ບ່າວກະບື*

**ທ່ານ** ສິງ, ຫົວໜ້າກົມ ສົ່ງພະນັກງານຂອງເຂົາ ຊື່ທ່ານ ບຸດ ໄປອັງກິດ ເພື່ອຮຽນພາສາອັງກິດ. ພໍທ່ານບຸດກັບຄືນມາ, ທ່ານຫົວໜ້າກົມກໍ່ເອີ້ນເຂົາເຂົ້າມາຫ້ອງການຂອງຕົນ ທັງເວົ້າຂຶ້ນວ່າ: "ນີ້ນະ... ທ່ານ ບຸດ, ທ່ານໄປຕ່າງປະເທດດ້ວຍທຶນຂອງລັດ. ຂ້າພະເຈົ້າຢາກຮູ້ໃຫ້ແນ່ນອນໃຈວ່າທ່ານຮັບຮູ້ພາສາອັງກິດໄດ້ດີປານໃດ. ລອງເວົ້າໃຫ້ຟັງເບິ່ງດູລັກສອງສາມປະໂຫຍກ" ທ່ານ ບຸດ ຖາມຄືນວ່າ: "ຈະໃຫ້ຂ້າພະເຈົ້າເວົ້າເປັນໂຕອັກສອນໃຫຍ່ ຫຼື ໂຕນ້ອຍ?".

## LEARNING ENGLISH

*#BAOKBU*

Mr. Sing, Director General of one department sent his Staff, Mr Boof to England to learn English. On his return, he called him to his office and said, " Mr. Boot, you've been abroad, at the state's expense. I'd definitely like to know how well you've learnt the language. So please speak a few sentences.

Mr. Boot responded confidently, " Mr. shall I speak in capital letters or small letters ? "asked Mr. Boot.

ອ່ານມ່ວນ ຊວນ ຍິ້ມ



ຄ່ອຍໄປຄ່ອຍມາ ທາງໜ້າມືຊຸມ

● ໂດຍ : ພູຜາ

ທະນາຄານພັດທະນາລາວ LDB Bank

ບໍລິສັດ ຫຼວງພະບາງ ພາວເວີ ຈໍາກັດ LUANG PRABANG POWER COMPANY LIMITED

ກຸ່ມບໍລິສັດ ອີພີແອວ ຈໍາກັດຜູ້ດຽວ EPL GROUP SOLE CO.,LTD

**ຜູ້ຊີ້ນໍາ :** ທ່ານ ສິງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :** ທ່ານ ສີສຸພັນ ແສງສະຫວັນ; ທ່ານ ວິເສດ ສະແຫວງສຶກສາ; ທ່ານ ທອງດາ ສຸພາສິດ; ທ່ານ ຄໍາຫວັນ ດາລາວົງ

**ຄະນະບັນນາທິການ :** ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ; ທ່ານ ອັນທະວີ ວົງພະຈັນ ຮອງ; ທ່ານ ເປຄໍາ ລໍຄໍາສອນ ຮອງ

**ກອງບັນນາທິການ :** ນາງ ກົງໃຈ ແສງອໍາພັນ; ນາງ ສຸພາວັນ ຫອມສະນິດ; ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :** ນາງ ນິດຕາ ຄຸນປາກດີ